ຄຳວ່າ ໄພ່ ໝາຍເຖິງພົລເມືອງສາມັນ ບໍ່ແມ່ນຂ້ອຍຂ້າ ບໍ່ແມ່ນທາສ (slave) ສຳຣັບ ຢູ່ໃນ ປະເທສລ້ານຊ້າງ ຍຸຄໂບຣານ ຈະແມ່ນຂອມ ຫລືມອນ ຫຼືສຍາມ ຣອດລ້ານນາ ຄວາມໝາຍ ຂອງຄຳວ່າ "ໄພ່" ຫລື ທາສ ກໍ່ໃຫ້ຄວາມໝາຍໄວ້ຄ້າຍຄືກັນ ແຕ່ການປະຕິບັຕຕໍ່ຂ້ອຍຂ້າ ຫລື ຜູ້ເປັນ ທາສ ນັ້ນ ແຕ່ລະປະເທສ ກໍ່ປະຕິບັຕແຕກຕ່າງກັນໄປ ຕາມວັທທະນະທັມ ຂອງແຕ່ລະປະ ເທສ ທີ່ມີຢູ່ ບໍ່ຄືກັນ.

ຄຳວ່າ "ຂ້າ" ໃນຄວາມໝາຍຂອງຄຳວ່າ ທາສ ຫລື slave ແລະຄຳວ່າ ລາວເທິງ" ນັ້ນ ບໍ່ ແມ່ນພວກດຽວກັນ ແລະມີຄວາມໝາຍ ຄົນລະຢ່າງ.

ຄຳວ່າ ລາວເທິງ ທີ່ເອີ້ນຊື່ກັນວ່າ "ຊົນຊາຕຂ້າ" ນັ້ນ ແມ່ນເອີ້ນກັນມາ ແຕ່ສມັຍຈາມ ແລະ ຂອມ ແລະກ່ອນສມັຍລ້ານຊ້າງ ຄືກ່ອນສມັຍຂຸນລໍ ທີ່ເຂົ້າມາກໍ່ຕັ້ງປະເທສລ້ານຊ້າງຂຶ້ນ ໃນປີ ຄ.ສ 739 ດັ່ງບົທຂຽນຂອງທ່ານ ໂຮເວີຣ໌ດ ລິສສ໌ (Howard Liss) ນັກສຳຣວດແມ່ນ້ຳຂອງ ໃນນາມ ອົງຄ໌ການສຫະປະຊາຊາຕ ຂຽນໄວ້ວ່າ (1) ..... As far back as the sixth century B.C, the Chines talked about "the barbarians beyond the Yangtze " These were the Khas, a warlike savage people. The Khas were defeated by the kingdom of Champa, as nation in the middle of Indochina, and they scattered into the hills where they live today.

(..... ເມື່ອຫວນຄືນໄປເຖິງອະດີຕ ເມື່ອ ສັຕວັສທີ 6 ກ່ອນ ຄ.ສ. ພວກຈີນເວົ້າເຖິງຊົນຊາຕປ່າເຖື່ອນ ເລີຍເຂຕແມ່ ນ້ຳແຍງຈ້ຶກຽງ ລົງມາ ແລະປະຊາຊົນເຫລົ່ານີ້ ເອີ້ນວ່າ "ພວກຂ້າ " ທີ່ມີລັກສນະນິສສັຍໂຫດຫຮ້ມແບບນັກຣົບ. ພວກຂ້ ຖືກປຣາຊັຍຕໍ່ອານາຈັກຣ໌ຈາມປາ ທີ່ເປັນປະເທສນຶ່ງ ຕັ້ງຢູ່ດິນແດນອິນດູຈີນພາຄກາງ ຄັນຕໍ່ມາ ພວກເຂົ້າຈຶ່ງກະແຈກ ກະຈາຍໄປຢູ່ຕາມພູຜ່າປາຣ໌ກ ຄືບອ່ນທີ່ພວກເຂົ້າ ເປັນຢູ່ໃນປັຈຈຸບັນ)

ສຳຣັບ ບັນທຶກປະວັຕິສາສຕຣ໌ລາວ ທີ່ຂຽນໂດຍທ່ານສາສຕຣາຈານ ມາຣ໌ຕິນ ສຈວຣ໌ຕ ຟັອກ (Martin Stuart-Fox) ໄດ້ກ່າວຢັ້ງຢືນໄວ້ ກຽ່ວກັບການປະຕິບັຕ ຂອງລາວ ທີ່ມີຕໍ່ພວກທາສ ຫລື

(1) Howard Liss, the Mighty Mekong 1967 P. 53

ຂ້ອຍຂ້າ ດັ່ງຄຳເວົ້າ(1) ຕໍ່ໄປນີ້ ຄື ...

Society consisted of three classes- Aristocracy, Free peasantry and slaves. Below these was the Lao Thoeng, the indigenous minorities also common referred as slaves (kha) Free men became slaves because they were captured in war, were being punished for crimes committed, or because they were indebted.

They were not badly treated however as early law indicate.

ສັງຄົມລາວ (ລ້ານຊ້າງ ສມັຍໂບຮານ) ປະກອບດ້ວຍ 3 ຊົນຊັ້ນ ຄື ຊົນຊັ້ນຂຸນນາງ, ຊົນຊັ້ນຊາວນາ ສາມັນ(ໄພ່) ແລະພວກຂ້າທາສ **(Slaves)** ຫລຸດຈາກນີ້ ກໍ່ແມ່ນພວກລາວເທິງ (ຂ້າ) ທີ່ເປັນຊົນເຜົ່າໂບຮານ (ຊົນຊາຕພື້ນເມືອງ)

ສຳຣັບ ປະຊາຊົນສາມັນຊົນ ທີ່ຈະກາຍເປັນທາສ (ຂ້ອຍຂ້າ) ນັ້ນ ເກີດຈາກສາເຫຕຄື (1) ຖືກຈັບເປັນຊະເລີຍເສິກ (2) ເພາະຢູ່ໃນຣະຫວ່າງການປະຕິບັຕໂທສທາງອາຊຍາ ເຊັ່ນໂທສຂ້າເຈົ້າເອົາຊອງ ປຸ້ນສະດົມຊັ້ຍສິນ ເປັນຕົ້ນ ແລະ (3) ເພາະຄວາມເປັນໜີ້ ແລະໃຊ້ຄືນບໍ່ໄດ ຈຶ່ງຍອມເອົາຕົນໄປເປັນທາສ (ຊົ່ວຄາວ) ເພື່ອຣັບໃຊ້ໜີ້ສິນ.

ແຕ່ ພວກຂ້າ ຫລື ທາສ ຢູ່ໃນປະເທສລ້ານຊ້າງນັ້ນ ບໍ່ໄດ້ຖືກປະຕິບັຕ ໃນລັກສນະໂຫດຮ້າຍ ຕ່ຳ ຊ້ານຫລາຍປານໃດ (**They were not badly treated**)

ກົດໝາຍ ຫລືພຣະຣາຊໂອງການກຳນົດຣະບຽບຂ້າທາສ ຫລືຂ້ອຍຂ້າ ໃນປະເທສສຍາມ ກຳນົດໄວ້ ໃນສມັຍເຈົ້າສາມພຣະຍາ ຫລືພຣະບໍຣົມຣາຊາທິຣາຊ ທີ 2 ຄື ຣະຫວ່າງ ຄ.ສ. 1437 (2) ກ່າວໄວ້ 7 ປະເພທ ດັ່ງນີ້:

(1)ທະເທນະ ວິກິໄນຍະຈາ ຄື ທາສທີ່ຖືກໄຖ່ນາໄດ ດ້ວຍອາສັຍເງິນ ຫລືຊື້ນາດ້ວຍເງິນ

(2) ປຸຕຕະທາສາ ຄືທີ່ເກີດມາ ໃນສມັຍທີ່ພໍ່ແມ່ ເປັນຂ້າທາສຢູ່ (ກໍ່ເປັນທາສນຳພໍ່ແມ່)

(3) ມາຕາປິຕາ ຈະທາສະກາ ຄືທາສທີ່ໄດ້ມາຈາກຂ້າງຝ່າຍບິດາ ມາຣດາ ຄື ທາສທີ່ພໍ່ແມ່ ມີທາສຢູ່ຫລາຍຄົນ ແລະມອບໃຫ້ລູກມາໃຊ້ສອຍ.

(4) ທິນນະກາ ຈະ ທາສທີ່ໄດ້ມາ ຈາກການທີ່ມີຜູ້ມອບໃຫ້

(5) ອັຕຕະ (ອັຜຜະ) ທາສາ ຈະ ຄືທາສອັນໄດ້ຊ່ວຍກ້ຽວຈົນທຸກຂ໌ຣະທົນ ແຕ່ງຄົນຜູ້ຕ້ອງໂທສທັນດ໌ .(ອາຈແມ່ນ ບຸຄຄົລ ທີ່ຖືກໂທສທັນດ໌ ເລີຍຖືກຄົນຜູ້ມີເງິນ ໄຖ່ອອກມາໃຊ້ສອຍເປັນທາສ))

(6) ພັຕຕະກາ ຈະ ທາສທີ່ໄດ້ຮັບໄວ້ໃຊ້ ໃນສມັຍເມື່ອງເຂົ້າຍາກໝາກແພງ

(7) ທະຊາທະຕາ ຈະ ທາສະກາ ທາສທີ່ໄດ້ມາເມື່ອນ່ຳທ້ຽຍ ໄປຣົບເສິກມີຊັ້ຍຊນະ (ພວກຊະເລີຍເສິກ)

ຣະບຽບການປະຕິບັຕ ຣະຫວ່າງນາຍກັບທາສ:

(1) ນາຍທາສ ມີສິທລ້ຽງໂທສ ໃສ່ໂສ້ໃສ່ຄາ ຜູກດ້ວຍເຊືອກໜັງ ແນວໃດ ກໍ່ໄດ້ ແຕ່ຢ່າໃຫ້ຕາຍ.

(2) ນາຍທາສ ມີສິທສັ່ງໃຫ້ຜູ້ເປັນທາສ ໄປຣັບໂທສທັນດ໌ຕ່າງໆ ແທນຕົນ ແທນເມັຽແລະລູກຂອງຕົນເອງ ກໍ່ໄດ້.

---

(1) Martin Stuart-Fox, A history of Laos, University of Queensland- Cambridge University Press 1997 P. 10

(2) ຣອງສາສຕຣາຈານຣຍ໌ບ້ຽອອຣ ປິຍະພົນທຸ,ໜັງສື ປະວັຕິສາສຕຣໄທຍ...ກ່ອນສມັຍສຸໂຂທັຍ ເຖິງ ພ.ສ.2475 ໜ້າ 141-142

(3) ນາຍທາສ ມີອຳນາຈສັ່ງໃຫ້ທາສໄປຣາຊການແທນຕົນ ກໍ່ໄດ້ ແມ່ນວ່າງານນັ້ນ ຈະສ່ຽງເຖິງຊີວິຕ ກໍ່ຕາມ.

(4) ທາສທີ່ຖືກໃຊ້ໃຫ້ຮັກສາດູແລຊັພຍ໌ສິນໃດໆ ຖ້າຊັພຍ໌ສິນນັ້ນໆ ແຕກເພ ເສັ່ຽຫາຍ ທາສຕ້ອງໃຊ້ແທນສ່ວນທີ່ເສັ່ຽຫາຍ ໃຫ້ແກ່ນາຍ ຈົນເຕັມຣາຄາ.

(5) ຜູ້ເປັນນາຍ ຂັບໄລ່ທາສຫນີໄດ້ ຫລືຈະຂາຍໄປກໍ່ໄດ້ ຖ້າບໍ່ສາມາຕຖ່ລ້ຽງໄດ້.

(6) ທາສທີ່ເປັນລູກໜີ້ (ຄົນທີ່ຍອມເປັນທາສ ຍອ້ນຕິດໜີ້) ຫລົບໜີໄປບ່ອນໃດ ເມື່ອເຈົ້າເປັ້ຽນາຍເງິນ ໄດ້ເສັ່ຽຄ່າຈ້າງໄປນຳເອົານາ ເປັນເງິນທ່ໍໃດ ເຈົ້າທາສມີສິທ ຄິດເອົາຄ່າເສັ່ຽຫາຍ ຈາກຜູ້ເປັນທາສເອງ ເປັນເງິນທ່ໍນັ້ນ.

(7) ຖ້າຫາກວ່າ ທາສກ່າວຫານາຍ ໃນເຣ້ືອງວ່າ ນາຍເງິນປຸ້ນຊັພຍ໌ ຫລືສ້ໂກງ ຫລືກ່າວຫາ ເປັນຂະບົດ ຖ້າບໍ່ຈິງ ຕົວທາສຈະຕ້ອງເອົາທາສຂຶ້ນຂາຍຕ່ໍາ ຕິດປ້າຍໃສ່ຫນ້າພາກ ທ່ໍາກາຣປະຈານ ໃຫ້ລ້ຽໂທສ ຕັດປາກ ແລະຂາຍນັ້ນເສັ່ຽ.

ແລະທາສ ມີໂອກາສ ຈະໄດ້ຮັບອິສຣະພາພ ກັບຄືນເປັນໄພ່ເມືອງທັມມະດາ (ເປັນເສຣີຊົນ) ຕາມຂໍ້ນິດຕ່ໍໄປນີ້ ຄື:

(1) ຖ້ານາຍເງິນ ອະນຸຍາຕໃຫ້ທາສ ບວຊເປັນພຣະພິກຂຸ ເປັນສາມະເນຣ ຫລືເປັນແມ່ຊີ ຖ້ວ່າ ພົ້ນຈາກພາວະທີ່ເປັນທາສ ໂດຍເດັດຂາດ ເມື່ອສິກອອກມາ ກໍ່ເປັນອິສຣະພາພ. ນາຍບໍ່ມີສິທ ຈະນຳເອົາຄົນຜູ່ນັ້ນ ຄືນມາເປັນທາສຕ່ໍໄປອີກ.

(2) ນາຍເງິນ ໃຊ້ທາສໄປສ້ຽງຄວາມແທນຕົນ ເມື່ອຖືກຈັບເປັນຊະເລີຍ ຫາກຄືນມາໄດ້ ກໍ່ມີສິທໄດ້ຮັບອິສຣະພາພ ນາຍບໍ່ມີສິທບ້ັງຄັບຄົນຜູ່ນັ້ນ ມາເປັນທາສຕົນເອງໄດ້ອີກ.

(3) ຖ້າທາສຟ້ອງນາຍວ່າ ເປັນຂະບົດຊາຕ ຫາກສອບສວນເປັນຄວາມຈິງ ຄົນຜູ່ນັ້ນ ຈະຖືກປ່ອຍຕົວເປັນໄທ ຫລືອິສຣະຊົນ ທັນທີ.

(4) ນາຍເງິນ ຫລື ພ່ໍຂອງນາຍເງິນ ຫລືພ່ີນ້ອງລູກຫລານ ຂອງນາຍເງິນ ຖ້າຮັບເອົາທາສເປັນເມັ່ຽ ທາສຜູ່ນັ້ນ ຈະກາຍເປັນໄທ ໃຫ້ພົ້ນຈາກພາວະທ່ໍເປັນທາສ ທັນທີ.

(5) ກາຣໄຖ່ຕົວທາສ ອອກເປັນອິສຣະຊົນນັ້ນ ຈະແມ່ນຄົນຜູ່ຂາຍທາສ ນາໄຖ່ເອົາຄືນ ຫລືໄຖ່ຕົວອອກ ຫລືບຸຄົລຜູ່ອ່ືນກໍ່ໄດ້ ທ່ີມີໃຈກຸສົລ ຍາກມາໄຖ່ຜູ່ໃດຜູ່ນ່ຶ້ງ ຈາກກາຣເປັນທາສ ກໍ່ແມ່ນໃຊ້ໄດ້ຄືກັນ.

ບັນທຶກທ່ີຜາກິຕມີຢູ່ນ້ີ ເຖ່ິງແມ່ນຈະເປັນຂອງພວກສຍາມ ສ່ວນ ທາງດ້ານລາວນັ້ນ ຜູ່ຊ່ຽນຍັງຫາຫລັກຖານບ່ໍພົບ ແຕ່ ກໍ່ເຊ່ືອວ່າ ຈະມີຣະບົບ ຄ້ຽບ່ໍແຕກຕ່າງກັນຫລາຍປານໃດ ເພາະເຣ້ືອງຂອງທາສ ບ່ໍແມ່ນຫາກ່ໍເກ່ີດຂ້ຶນໃນສມັຍລ້ານຊ້ຳ ແຕ່ເກ່ີດຂ້ຶນແຕ່ສມັຍໂບຮານ ດົນນານມາແລ້ວ ໂດຍສະເພາະ ຢູ່ໃນປະເທສອິນເດ ກໍ່ມີຣະບົບທາສ ທ່ີມີກາຣຈ່ຳ

ແມກັນ ຢ່າງຮ້າຍແຮງ ລັງກຽດກັນເອງໜັກຮະຫວ່າງຊົນໃນຊາຕ ເຖິງຂັ້ນທີ່ວ່າ ຈັບຕ້ອງກາຍກັນບໍ່ໄດ້ (Untouched men) ແຕ່ຊົນຊາຕລາວເຮົາ ເພີ່ນບໍ່ໃຫ້ປະຕິບັຕຕໍ່ທາສ ຫລືປະຕິບັຕຕໍ່ພວກລາວເທິງ ແບບໂຫດຮ້າຍ ຂາດຄວາມເປັນ ມະນຸສ ຈຶ່ງມີຫລັກການບັງຄັບໃຫ້ຄົນລາວ ເອີ້ນພວກລາວເທິງໃນແບບໃຫ້ກຽຕ ນັບຖື ວ່າ "ອ້າຍ" ຫລື "ອ້າຍກິກ" ສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ອົງຄ໌ພຣະບິດາຂອງພວກເຮົາ ກໍ່ຊົງໃຫ້ກຽຕແກ່ຜູ່ນໍາລາວເທິງ ຄືພຣະ ຍາ ກະ ຊັກ ເຖິງຂັ້ນ ໃຫ້ປຸກໂຮງຢູ່ຕິດກັບພຣະຣາຊວັງ ຜູ່ໃດທີ່ນໍາເອົາສິ່ງຂອງມາຖວາຍພຣະເຈົ້າແຜ່ນດິນລາວ ກໍ່ໃຫ້ພຣະຍາ ກະຊັກຮັບເອົາໄວ້ກ່ອນ.

ລັທທິສາສນາແຖນຟ້າ ແລະຄວາມເປັນມາ ຂອງຄໍາວ່າ " ອ້າຍກິກ "

****

ຄວາມເຊື່ອຖືເຣື້ອງ "ແຖນຟ້າ" ແມ່ນສາສນາດັ້ງເດີມ ຂອງຊົນຊາຕລາວ ໃນສມັຍກ່ອນລ້ານ ຊ້າງ ຫລືຕົ້ນກໍາເນີດຂອງລ້ານຊ້າງ. ເວລາກ່ອນຫນ້ານີ້ຫລາຍສິບປີ ຫລືຢູ່ ໃນບ້າງທ້ອງຖິ່ນ ໃນ ປັຈຈຸບັນ ຍັງມີຄວາມນັບຖືຜີໄທ ຜີແຖນ ເປັນປະຈໍາ ຖືວ່າ ເປັນລັທທິສາສນາດັ້ງເດີມ ຂອງຄົນ ລາວ. ເຣື້ອງສາສນາແຖນຟ້າ ເລີ້ມມາຈາກຄວາມເຊື່ອ ທີ່ວ່າ ມະນຸສ ເກີດມາຈາກຟ້າຈາກແຖນ ໃນພຣະຣາຊໂອວາທ ຂອງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ໄດ້ຊົງກ່າວເຖິງຊື່ພຣະຍາແຖນ ຄື *ແຖນຟ້າຄື້ນ ທ້າວແຖນຄົນ ແຖນຜຕ່ ແຖນຊົ່ງ ແຖນເຖືອກ ທ້າວເຖົ້າເຍີ ເຖົ້າໄສ ແມ່ຍ່າງ່ວນ*

ແລະ ຊົນຊາຕອ້າຍລາວ ມີຄໍາສັ່ງສອນສືບໆກັນມາ ວ່າ ການທີ່ຕະກຸລມະນຸສ ເກີດມີ 3 ເຊື້ອ ພັນທຸ ຫລື 3 ຕະກຸລ(Races) ນັ້ນ ເຊື່ອວ່າ ມະນຸສຍຸຄແຣກນັ້ນ ແມ່ນພວກດຽວກັນ ເພາະເກີດມາ ຈາກຫມາກນ້ໍາເຕົ້າປຸ ຫມ່ອຍດຽວກັນ. ຫມາກນ້ໍາເຕົ້ານັ້ນ ພາສາປາລີ ເວົ້າວ່າ "ລາວຸ " ສະນັ້ນ ຈຶ່ງພາໃຫ້ພວກເຮົາ ໄດ້ຊື່ວ່າ " ລາວ" ເພາະເກີດມາຈາກ"ລາວ" ຄືຫມາກນ້ໍາເຕົ້າ.

ພຣະຍາແຖນປະທານຫມາກນ້ໍາເຕົ້າ 3 ຫມ່ອຍ ໃຫ້ແກ່ພຣະເຈົ້າຊຸມບູຣົມ ຄື ຫມ່ອຍທີ 1 ແມ່ນ ບັນຈຸດ້ວຍຜູ້ຄົນ ຫລືຫມູ່ມະນຸສ ຫມ່ອຍທີ 2 ບັນຈຸດ້ວຍ ຫມູ່ສັຕສາພາຫານະໃຊ້ສອຍຕ່າງໆ ແລະ ຫມ່ອຍທີ 3 ບັນຈຸດ້ວຍ ພືຊພັນທ໌ທັນຍາຫານ ຕ່າງໆ.

ສໍາຣັບ ຫມ່ອຍທີ 1 ທີ່ບັນຈຸດ້ວຍຫມູ່ມະນຸສ ນັ້ນ ຄັນນໍ້າມາຣອດເມືອງລຸ່ມແລ້ວຈຶ່ງໄດ້ເພົາເຫລັກ ຊິເຈາະຫມາກນ້ໍາເຕົ້າ ອອກເປັນຮູ ເພື່ອໃຫ້ຫມູ່ມະນຸສອອກມາ ແລະພວກມະນຸສທີ່ອອກມາຈາກ ຫມາກນ້ໍາເຕົ້ານັ້ນ ສໍາຣັບ ພວກທີ່ພ່ນອອກມາກ່ອນ ຖາກເຖືອກັບຊິ ຫລືແຂບສີດໍາ ຂອງຫມາກ ນ້ໍາເຕົ້າ ບ່ອນທີ່ຖືກຊິນັ້ນ ຜິວກາຍຈຶ່ງດໍາ ພວກນີ້ ຄືຊົນຊາຕ Negroid ລາວເຮົາເອີ້ນ " ອ້າຍກິກ"

ສ່ຳຣັບ ຢູ່ໃນປະເທສລ້ານຊ້ຳງໄດ້ແກ່ "ພວກຂ້ ສ່ຳຣັບ ພວກທີ່ອອກມາຊຸດທີ 2 ຜິວກາຍເປັນ ສີເຫລືອງ ພວກນີ້ ຄືຊົນຊາຕ Mongoloid ແລະ ກໍ່ແມ່ນຕະກຸລຊາຕລາວ ນີ້ເອງ. ສ່ວນ ພວກ ທີ່ ອອກມາຊຸດທີ 3 ແລະເປັນພວກສຸດທ້ຍ ຜິວກາຍ ຈຶ່ງເປັນສີຂາວ ຫມາຍເຖິງພວກຜິວຂາວ ທົ່ວໄປ ຄືຊົນຊາຕ Caucasian ຢູ່ໃນປະເທສລ້ານຊ້ຳງກໍ່ໄດ້ແກ່ພວກ ມູເຊ ອີກ໋ ລັນແຕນ ແມ້ວ ຢ້ວ ໄທດ໋ຳ ເປັນຕົ້ນ.

ໃນສມັຍໂບຣານນັ້ນ ບ່ວ່າຢູ່ແຫ່ງໃດ ເທົ້ຳທີ່ຜູ້ຂຽນເຫັນດ້ວຍຕົນເອງ ໂດຍສະເພ່ຳະຢູ່ເມືອງໂຂງ ແລະເມືອງຈ່ຳປ່ຳສັກ ເວລ່ຳເພີ່ນປະກອບຣິຕປະເພນີທ່ຳງກ່ຳຣ ເຊ່ັນກ່ຳຣໄຫລເຮືອໄຟ ຊ່ວ່ງເຮືອ ເປັນຕົ້ນ ເພີ່ນນິຍົມໃຫ້ພວກອ້ຍກ໋ຳລ່ັງມືທ່ຳພິທີ ເປັນຄົນແຣກ ຈຶ່ງຖືວ່ຳເປັນພິທີ ຖືກຕ້ອ.

ພຣະຣ່ຳຊໂອ່ງກ່ຳຣ ຂອ່ງສົມເດັຈພຣະເຈົ້ຳຟ້ຳງຸ່ມ ໄດ້ກ່ຳວເຖິ່ງເຖົ້ຳໄລ ເຖົ້ຳເຍ ຄືຫມ່ຳຍເຖິ່ງ " ປູ່ເຍ-ຍ່ຳເຍ " ເຊ່ິ່ງເປັນມະນຸສຄູ່ແຣກ ທີ່ຖືກ່ຳເນີດມ່ຳຈ່ຳກຫມ່ຳກນ້ຳເຕ້ຳປຸ່ ຫນ່ວຍນັ້ນ ເຊ່ິ່ງກ໋ຳ ທຽບເທົ້ຳພວກມະນຸສ 2 ຄົນ ຄື ອະດັມ (Adam) ແລະອ໊ຟ (Eve) ຕ່ຳມຄ່ຳວມເຊ່ືອຂອ່ງສ່ຳສນ່ຳ ພຣະເຍຊູຄຣສຕ.

ຄ້ັ້ງແຣກ ຄ່ຳວມເຊ່ືອຂອ່ງຊົນຊ່ຳຕອ້ຍລ່ຳວ ເປັນໄປໃນຮູບເທພນິຍ່ຳຍຈຶ່ງບ່ໄດ້ແຕກຕ່ຳ່ງໄປ ຈ່ຳກຫລ່ຳຍໆຊ່ຳຕໃນໂລກ. ຄ່ຳວມເຊ່ືອບ່ຳ່ງຢ່ຳ່ງ ຍ້ັງໄດ້ກ່ຽ່ວໂຍ່ງໄປເຖິ່ງນິທ່ຳນນ້ຳຖ້ວມໂລກ ເຊ່ິ່ງ ມະນຸສພ່ຳກັນລ້ົ້ມຕ່ຳຍສູນພັນທຸ໌ໄປເກ໊ືອບໝ໊ົດ ເວັ້ນແຕ່ປູ່ລ່ຳ່ງເຊ່ິ່ງ ກັບຂຸນເຄ໊ັດ ຂຸນຄ່ຳນ ທ່ີ່ຮູ້ລ່ວ່ຳ ຫນ້ຳ່ວ່ຳ ພຣະຍ່ຳແຖນ ຈະບັນດ່ຳນໃຫ້ນ້ຳຖ້ວມໂລກ ຍ້ອນເຫຕ່ວ່ຳມະນຸສ ບ່ຍ້ອນເສ້ັຽສ່ວ່ຍແກ່ ພຣະຍ່ຳແຖນ ຕ່ຳມກ່ຳນົດ. ປູ່ລ່ຳ່ງເຊ່ິ່ງ ຫ້ຳ່ງຂຸນເຄ໊ັດ ແລະຂຸນຄ່ຳນເມ່ືອຮູ້ລ່ວ່ຳຫນ້ຳຈ່ຶ່ງແຕ່ງແພ ໄ້ ບັນທຸກຄ້ອບຄ້ົວຂອ່ງຕົນ ຄັນນ້ຳຖ້ວ່ມມ່ຳຈ່ຶ່ງລ້ອຍແພໄປເຖິ່ງເມ່ືອ່ງແຖນ ແລະຈ່ຶ່ງນ່ຳໄປຈ້ອດຢູ່ບ່ຶ່ງ ແຖນ ຄັນນ້ຳບ່ົກແຫ້ງແລ້ວ ຈ່ຶ່ງລ່ົງມ່ຳ ຕ້ັ້ງຄ້ອບຄ້ົວຢູ່ ທ່ີ່ງ່ຳນອ້ຍອ້ຍໝູ (ເມ່ືອ່ງແຖ) ແລ້ວ ຕ່ຳມ່ຳຈ່ຳກ່ຳ້ວເຖິ່ງຍຸຄພຣະເຈ່ຳຊຸນບຸຣມ ກັບໝ່ຳກນ່ຳ່ງຕ່ຳ.

ແລະ ໃນຄັນພ໊ີຣ໌ ຮ໊ີບຣູ (Hebrew) ຂອ່ງພວກຢ໊ິວ ກ໋ໍ່ມ໊ີເຮ໊ື້ອ່ງກ່ຽ່ວກັບພຣະເຈ໊ົ້ຳ ເຢໂຮວ່ຳ ທ່ີ່ຊ໊ົ່ງ ໂກທ ແກ່ມະນຸສ ຈ່ຶ່ງບັນດ່ຳນ ໃຫ້ນ້ຳຖ້ວ່ມໂລກ ຫມ່ນຸມະນຸສ ພ່ຳກັນຈ໊ິບຕ່ຳຍລ້ົ້ມຕ່ຳຍລ໊ົ່ງ ຈ໊ິນຫມ໊ົດ ຍ້ັງເຫລ໊ືອແຕ່ ໂນ່ອ່ຳ (Noah) ຈ່ຶ່ງສ່ຳ້ງເຮ໊ືອ ອ່ຳຣ໌ກ (Ark) ບັນທຸກຄ້ອບຄ້ົວ ຫມ່ນຸມະນຸສ ແລະສ໊ັຕ ພ່ຳຫ່ຳນະຕ່ຳ່ງໆ. ສ່ິ່ງທ່ີ່ມ໊ີຊ໊ີວ໊ິຕ ທ້ັ້ງຫລ່ຳຍ ຈ່ຶ່ງຄ່ົ້ງຍ້ັງເຫລ໊ືອຢູ່ຣອດປ້ັຈຈຸບ້ັນ.

ໃນຄັນພ໊ີຣ໌ພຣ່ຳຫ່ມ ກ໋ໍ່ໄດ້ເວ້ົ້ຳເຖິ່ງນ້ຳຖ້ວ່ມໂລກ ຄ໊ືກ້ັນ ໂດຍພຣະນ່ຳຣ່ຳຍນ໌ ໄດ້ອ່ະ່ວ່ະຕ່ຳຣລ່ົ້ງມ່ຳ ເປັນເຕ່ົ້ຳ (ນ່ຳຣ່ຳຍນ໌ 10 ປ່ຳ໋ ໃນຍຸຄກຸຣະນ່ຳ່ວ່ະຕ່ຳຣ) ລ່ົ້ງມ່ຳປ່ຳ້ມນ້ຳ່ຊ່ວ່ຍຊ໊ີ່ວ໊ິຕມະນຸສ.

ແນ່ວຄ໊ຶດແບບອ້ຍກ໊ິກ ໄດ້ມ໊ີມ່ຳດ໋ັ້ງທ່ີ່ກ່ຳ່ວນ໊ີ້ ໂດຍພ່ວກມະນຸສກຸ່ມດ໋ັ້ງເດ໊ີ່ມ ໃນປະເທສລ້ານ

ຊ້າງ ກໍ່ແມ່ນພວກຂ້າ ທີ່ມີມາແຕ່ສມັຍຟູນັນ ຈາມ ແລະຂອມ ແລະ ເປັນພວກທີ່ມີຖິ່ນຖານ ຢູ່ທີ່ນີ້ ມາກ່ອນພວກລາວ ແລະຈຶ່ງຖືກຍົກຍ້ອງໃຫ້ກຽຕແລະຖືວ່າເປັນ "ອ້າຍກົກ" ດັ່ງທີ່ກ່າວມາແລ້ວ.

(2) ຣະບົບແນວຄຶດ ກ່ຽວກັບເສຕຖະກິຈ ແລະການພັທທະນາບ້ານເມືອງ

****

ກ່ຽວກັບການເສຕຖະກິຈ ນັ້ນ ພຣະຣາຊໂອງການ ຊົງປະກາສໄວ້ເປັນນະໂຍບາຍ ຂອງປະເທສລ້ານຊ້າງ ໃນສາຣະສໍາຄັນ ກໍ່ຄື ກ່ຽວກັບການສ້ວນຊີວິຕ ແລະຊັພຍ໌ສິນ ຂອງພົລເມືອງລາວ.

ພຣະຣາຊໂອງການ ຊົງປະກາສວ່າ *ສົມບັຕ ອັນຈັກເກີດມາ ໃນແຜ່ນດິນນີ້ ຄົນນີ ສົມບັຕ ກໍ່ຈົ່ງນີ ຖ້າຄົນບໍ່ນີ ສົມບັຕເຂົ້າຂອງ ກໍ່ຫ້າບໍ່ນີ (ບໍ່ໄດ້)*

ຄວາມຫມາຍໃນພຣະຣາຊໂອງການນີ້ ຈະເຫັນໄດ້ວ່າ ຣະບົບແນວຄຶດ ສມັຍກ່ຕັ້ງປະເທສລ້ານ ຊ້າງ ຂອງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ນັ້ນ ເປັນແນວຄຶດທີ່ກ້າວໜ້າ ຈົນມາຣອດຍຸຄ ສມັຍປັຈຈຸບັນ ຍັງບໍ່ມີຫລ້າສມັຍເລີຍ.

ເພາະ ພຣະອົງຄ໌ ຊົງຮັບຮູ້ຕາມຫລັກການທີ່ວ່າ ຄວາມຈະເຣີນກ້າວໜ້າຂອງຊາຕ ແລະຂອງ ສ້ງຄົມມະນຸສ ນັ້ນ ຂຶ້ນຢູ່ກັບພະລັງມະນຸສ ຫລືຊັພຍາກອຣບຸຄຄົລ (Personnel Resources)

ເພາະສະນັ້ນ ການສ້ວນຊີວິຕ ພົລເມືອງ ຫລືການຂຍາຍຈ່ານວນພົລເມືອງ ກໍ່ຫມາຍເຖິງການ ຂຍາຍອ່ານາຈການຊື້ກິນຊື້ໃຊ້ ພ້ອມທັ້ງເປັນການຂຍາຍອ່ານາຈການຜລິຕ ແລະທັ້ງເປັນການ ຂຍາຍຄວາມກ້າວໜ້າ ທາງເສຕຖະກິຈ ຂອງຊາຕໄປໃນຕົວ. ພຣະຣາຊໂອງການ ຈຶ່ງເນັ້ນຂໍ້ນັ ຍັຕໄວ້ຊ້ຳທ້າຍວ່າ..ເຮົາບໍ່ໃຫ້ຂ້າຄົນ ກໍ່ເພື່ອສິ່ງນີ້ ແລ. ພຣະຣາຊດໍາຣັດ ທີ່ຊົງບັງຄັບບໍ່ໃຫ້ຂ້າຄົນ ເຊິ່ງຊົງປະກາສອອກນັ້ນ ຈຶ່ງບໍ່ພຽງກ່ຽວກັບດ້ານມະນຸສທັ ຍ່າງດຽວ ແຕ່ຍັງກ່ຽວໂຍງໄປເຖິງ ແຜນນະໂຍບາຍ ກ່ຽວກັບການພັທທະນາເສຕຖະກິຈ ແລະ ການຂຍາຍຄວາມຈະເຣີນຄວາມກ້າວ ໜ້າ ຂອງປະເທສລ້ານຊ້າງ ອີກດ້ວຍ.

ເມື່ອສຶກສາເນື້ອໃນຂອງພຣະຣາຊປາໄສ ຄັ້ງນັ້ນ ທີ່ເກີດຂຶ້ນໃນປີ ຄ.ສ.1357 ຄືເມື່ອ 640 ກ່ວາ ປີ ຜ່ານມາ ກໍ່ຈະພົບໄດ້ວ່າ ແນວຄຶດແລະນະໂຍບາຍທາງເສຕຖະກິຈ ໃນຍຸຄການຫລ້ນໂຣມລາວ ໃນສມັຍຕົ້ນນັ້ນ ກໍ່ມີຄວາມກ້າວໜ້າ ທີ່ບໍ່ອາຈແນມນາຍໄດ້ເລີຍ. ການພັທທະນາເສຕຖະກິຈຍ່ອມ ອີງໃສ່ຊັພຍາກອຣມະນຸສ ເປັນຫລັກ, ເພາະພົລເມືອງ ແມ່ນຜູ້ປະກອບເງື່ອນໄຂການຜລິຕ ເປັນ

ເຈົ້າຊອງແຮງງານໃນການຜລິຕ ແລະເປັນທັງຜູ້ຊື້ກິນຊື້ໃຊ້ສິ່ງຜລິຕ.

ຄຳວ່າ "ຄົນມີ ສົມບັຕ ກໍ່ຈິ່ງມີ " ເປັນການຕຣັສ ເນັ້ນໃສ່ການຜລິຕ ແລະການບໍຣິໂພຄ ເຊິ່ງເປັນ ຫລັກການໃຫຍ່ທາງເສຕຖະກິຈ ຂອງໂລກ ແລະຍິ່ງໃນຍຸຄປັຈຈຸບັນ ເມື່ອຮູ້ວິຊາການດ້ານເສຕຖະ ກິຈ ມີຄວາມກ້າວໜ້າທີ່ສຸດ ຖ້າຄຶດໄປເຖິງພຣະຣາຊປາໄສ ໃນຍຸຄນັ້ນ ກໍ່ບໍ່ໄດ້ຫ່າງໄກ ຈາກແນວ ຄວາມຄຶດ ຂອງນັກວິຊາການ ຍຸຄໃໝ່ນີ້ ເລີຍ.

ຄວາມຈິງ ອັນໃດໆໃນໂລກນີ້ ກໍ່ມາຈາກຄົນ, ປະເທສທີ່ມີພົລເມືອງຫລາຍ ແລະມີຄວາມສງົບ ທີ່ເປັນມູລເຫຕ ໃຫ້ ແກ່ການພັທນາ ແລະຄວາມຄ່ອງຕົວ ໃນການຫມຸນວຽນ ທາງເສຕຖະກິຈ ເຊິ່ງຖືເປັນພື້ນຖານຕົ້ນຕໍ ແຫ່ງຄວາມ ຈະເຣີນກ້າວໜ້າ ຂອງປະເທສ. ສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ຊົງປະຈັກຂ໌ແຈ້ງເຣື້ອງນີ້ມາແລ້ວ ໃນຍຸຄຂອງ ພຣະອົງຄ໌ ຈິ່ງມີພະຣາຊໂອງການເຊັ່ນນີ້ໄວ້.

ເວົ້າສະເພາະແລ້ວ ກໍ່ໝາຍຄວາມວ່າ ບັຣພະບຸຣຸສ ຂອງຊາຕລາວຜູ່ນີ້ ມີນ້ຳພຣະທັຍ ເຕັມໄປດ້ວຍຄວາມຫວັງ ອັນສູງສົ່ງ ສຳຣັບຊາຕລາວ ກໍ່ຄື ເພື່ອຄວາມຈະເຣີນຜາສຸກ ຂອງພົລເມືອງທົ່ວປະເທສລ້ານຊ້າງ ນີ້ເອງ. ອັນນີ້ ແມ່ນ ການປະຕິວັຕຊາຕ ເພື່ອຄວາມເປັນຊາຕ ທີ່ແທ້ຈິງ.

ຕັ້ງແຕ່ຍຸຄນີ້ ເປັນຕົ້ນມາ ປະເທສລ້ານຊ້າງ ຈິ່ງກາຍເປັນສູນຍ໌ກາງອັທທະນະທັມ ແຫ່ງລຸ່ມແມ່ນ້ຳຂອງ ທັງສອງຝັ່ງ ທີ່ສືບທອດມາຕາມລຳດັບ ແຕ່ຍຸຄອັທທະນະທັມບ້ານຊຽງ ທີ່ແຂວງອຸດອຣ ເຊິ່ງມີອາຍຸ ບໍ່ຕ່ຳກວ່າ 4000 ປີ ຈົນຕໍ່ມາ ຮອດຍຸຄອຸຮັງຄະທາຕ (ຍຸຄສຣີໂຄຕບອງ)ຍຸຄຟູນັນ ແລະເຈນລະ ຈິ່ງມາຮອດຍຸຄຟ້າງຸ່ມ ທີ່ກໍ່ຕັ້ງລ້ານຊ້າງເອກພາພ ແລ້ວກໍ່ມາຮອດສມັຍປັຈຈຸບັນ ເປັນເວລາກວ່າ 650 ປີ ຜ່ານມາ.

(3) ກຳນົດໜ້າທີ່ຂອງເຈົ້າຄອງນະຄອຣຕ່າງໆ ກ່ຽວກັບ ການປອ້ງກັນຮັກສາຄວາມປອດພັຍແຫ່ງຊາຕ

****

ພຣະຣາຊໂອງການ ຂໍ້ທີ 2 ມີຄວາມໝາຍ 2 ຢ່າງຄື:

(1) ບັງຄັບໃຫ້ເຈົ້າຄອງນະຄອຣ ຫລືພວກເຈົ້າຂຸນທຸກຄົນ ຕ້ອງຮັກສາມິຕຕະພາພພາຍ ໃນຊາຕ ຕົນເອງ ບໍ່ໃຫ້ຈ່າແນກແບ່ງພວກ ແລະກໍ່ຄວາມຂັດແຍ່ງ ຍາດແຍ່ງແຂ່ງອຳນາຈ ແລະ ທຳລາຍກັນເອງ ບ້ານເມືອງ ຈິ່ງຈະມີຄວາມໝັ້ນຄົງ ແລະມີຄວາມປອດພັຍ.

ດັ່ງຂໍ້ຄວາມ ໃນພຣະຣາຊໂອງການ ບັນຍັຕວ່າ ພວກເຈົ້າທັງຫລາຍ ຢ່າຜິດ ຢ່າຂ້ຳກັນ

(2) ກຳນົດໃຫ້ເຈົ້າຄອງນະຄອຣ ທຸກຄົນ ໃຫ້ພ້ອມກັນດູແລ ຂອບບ້ານແດນເມືອງທັງ ນອນ ຕ່າງບ້ານຕ່າງເມືອງ (ຊາວຕ່າງດ້ວທ້ວຕ່າງແດນ) ຈະກະທຳບຽດບຽນບ້ານເມືອງເຮົາ ກໍ່ໃຫ້ເຫັນແຈ້ງ.

ພຣະຣາຊໂອງການນີ້ ກ່ານົດນະໂຍບາຍເນັ້ນຫນັກໃສ່ ພາຣະກິຈການປອ້ງກັນປະເທສຊາຕ, ເຊິ່ງໃນສມັຍນັ້ນ ອ່ານາຈການປົກຄອງ ຂຶ້ນຢູ່ໃນກ່າມືຂອງເຈົ້າຂຸນມຸນນາຍປະຈ່າຫອ້ງຖິ່ນຕ່າງໆ ແລະພຣະຣາຊໂອງການ ຈິ່ງຊົງເນັ້ນໃສ່ພວກຜູ່ນ່ຳາຫອ້ງຖິ່ນ ໃຫ້ສ່ຳນຶກຊາບວ່າ ການແບ່ງແຍກ ແຕກພວກ,ການຂັດແຍ່ງແຂ່ງດີ ແລະການເອົາປຽບແລະທ່ຳລາຍເຊິ່ງກັນແລະກັນ ໃນຣາຊອາ ນາຈັກຣ ຍອ່ມເປັນມູລເຫຕແຫ່ງສົງຄາມ ກາງເມືອງ ແລະ ກໍ່ເປັນການທ່ຳລາຍຊາຕບ້ານເມືອງ ຂອງຕົນເອງ.

ຫມາຍຄວາມວ່າ ໃຫ້ພວກເຈົ້າແຂວງ ເຈົ້າເມືອງ ແລະຜູ້ບັນຊາການເຂຕຕ່າງໆ ໃຫ້ພ້ອມ ພາກັນ ດູແລເຂຕນ້ຳແດນດິນ ຂອງປະເທສລ້ານຊ້າງ ຢ່າໃຫ້ກໍ່ຄວາມວິວາທບາດຫມາງ ແລະ ຜິດຂ້ອງຕ້ອງກຽງ ຫລືແຂ່ງຂັນ ທ່ຳລາຍກັນເອງ.

ນີ້ແມ່ນ ນະໂນຍບາຍປອ້ງກັນປະເທສ ຄື ບ້ານເມືອງ ພາຍໃຕ້ການ່ຳ ຂອງພວກເຈົ້າຂຸນມຸນ ນາຍ ແລະຜູ່ນ່ຳາຫ້ອງຖິ່ນນັ້ນ ມີຄວາມສ່ຳຄັນທີ່ສຸດ ກຽ່ວກັບຣະບົບການປອ້ງກັນຄວາມປອດພັຍ ຂອງຊາຕ ເພາະຜູ່ນ່ຳາຫ້ອງຖິ່ນ ແມ່ນເຈ້ຳາຫນ້ຳາທີ່ຝ່າຍປະຕິບັຕການປົກຄອງຕົວຈິງ ໃຫ້ຊິດກັບ ປະຊາຊົນ ສະນັ້ນ ຫາກພວກຣະດັບຂັ້ນປະຕິບັຕງານຕົວຈິງ ເກີດການຂັດແຍ່ງ ແລະອອ່ນແອ ໃນຣະບຽບວິນັຍ ຫລືໃນພາລປະຕິບັຕ ບ້ານເມືອງກ່ຈະປະສົພພັຍພິບັຕ ໄດ້ງ່ຍທີ່ສຸດ.

ຄືກັບທີ່ມີຄ່ຳສອນ ກ່ານົດໄວ້ໃນຫນ້ຳສື ສ້ຳຂສິລປ໌ຊ້ຍ ຂອງທ້ຳວປ່ຳາລ່ຳ ເຊິ່ງເປັນການ ຖ່ຍທອດຄວາມຮູ້ສຶກ ຂອງບັຣພະຊົນລ້ຳ ຍຸຄສມັຍໂບຣ້ານໄວ້ ເປັນຢ່ຳງດີ້ຳວ່ຳ

ກ້ຳເມືອງຊ້ຶ້ນ ຊ້ຳງໃດ ດູຜອ່ນ ໃຫ້ນອບຂ້ຳ ຂຸນຕ້ົ້ນ ແຕ່ງປອງ

ຄື ຣະບົບການປົກຄອງບ້ານເມືອງບອ່ນໃດ ທີ່ເກີດຄວາມອອ່ນແອ ຕອ້ງຂອກຳາຂ້ຳ ຣາຊການ ຫລືເຈ້ົ້າຂຸນຜູ້ທີ່ເຊ່ືອຖ້ືໄດ້ (ວ່ຳ ມີຄວາມຊ່ືສັຈ ມີຄວາມຮູ້ຄວາມສ່ຳມ່ຳຕຖ) ໄປ ປົກຄອງ ແລະທ່ຳການແກ້ໄຂ.

ພຣະຣາຊໂອງການຂ້ັ້ນ້ີ ເປັນຫ້ຳງຄ່ຳສ່ັ້ງສອນ ແນະນ່ຳ ແລະເປັນຫ້ຳງອຸດົ້ມຄະຕ ເພ່ືອໃຫ້ພວກ ເຈ້ົ້າຂຸນມຸນນາຍ ຖ ເອ້ົ້າເປັນຂ້ໍ້ປະຕິບັຕ ເພ່ືອຄວາມປົກກຸ່ນຊຸ່ມເຢ້ັນ ຂອງປະເທຊາຕ ແລະຂອງພົລ ເມືອງ ທ່ົ້ວປະເທສລ້ານຊ້ຳງ ນ້ັ້ນເອງ.

(4) ກຳນົດຣະບຽບກອງປະຊຸມຫລວງ ແຫ່ງຊາຕ ໄວ້ຕາຍຕົວ

****

ໃນເມື່ອມີການປະກາສພຣະຣາຊໂອງການ ອອກມາ ຢ່າງແຈ່ມແຈ້ງແລ້ວ ສິ່ງທີ່ສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ບໍ່ໄດ້ຊົງລະເລີຍ ກໍ່ຄື ພາຄປະຕິບັຕຕົວຈົງຂອງເຈົ້າໜ້າທີ່ ຫລືພວກເຈົ້າຂຸນມຸນນາຍ ວ່າຈະສາມາຕຖ່ຳເອົາພຣະຣາຊໂອງການ ອອກໄປປະຕິບັຕຕົວຈົງ ແທ້ຫລືບໍ່.

ພ້ອມກັນນັ້ນ ພຣະອົງຄ໌ ກໍ່ຊົງສ່ຳນຶກເຖິງສິ່ງສ່ຳຄັນ ຄືຄວາມເປັນເອກພາພ ຂອງອ່ຳນາຈການ ປົກຄອງ ທີ່ພຣະອົງຄ໌ສ້າງຂຶ້ນ ເພາະສະນັ້ນ ໃນພຣະຣາຊໂອງການ ຈຶ່ງຊົງກຳນົດວັນກອງປະຊຸມ ຫລວງປະຈຳຊາຕໄວ້ ຢ່າງຕາຍຕົວ ໃຫ້ທຸກຄົນຈົດຈຳຖືປະຕິບັຕ ຄືໄດ້ຊົງກຳນົດເອົາເດືອນ 3 (ຄື ໃນວັນເພັ) ທຸກໆປີ ເປັນວັນປະຊຸມປະຈຳຊາຕ ໂດຍບັງຄັບໄວ້ວ່າ...

(1) ໃນທຸກໆ 2 ເດືອນ ໃຫ້ເຈົ້າໜ້າທີ່ຣາຊການ ຂອງພາຄສ່ວນນັ້ນ ຂຶ້ນໄປຂາບທູນລາຍງານຣາຊການ ຖວາຍພຣະອົງຄ໌ ໃຫ້ຊົງຊາບເຫຕຮ້າຍການຮ້ຄ ທຸກປະການ.

(2) ໃນທຸກໆ 3 ປີ ຈຶ່ງມີກອງປະຊຸມໃຫ່ຽປະຈຳຊາຕ ໂດຍໃຫ້ເຈົ້າຂຸນ (ເຈົ້າຄອງນະຄອຣ) ທຸກແຫ່ງ ໃຫ້ຂຶ້ນໄປຣ່ວມກອງປະຊຸມຫລວງ ແຫ່ງຊາຕ ແລະເຂົ້າຣ່ວມໃນຣາຊພິທີ ທຸກໆຄົນ.

ແລະເນື່ອງໃນກອງປະຊຸມຫລວງແຫ່ງຊາຕ ນີ້ ເນື່ອທຽບກັບຍຸຄປັຈຈຸບັນ ຄົງຈະມີຣາຊພິທີ ທີ່ກ່ຽວກັບການ **ສາບານນ້ຳພິພັທທະສັຈຈະ** ຕ່ໃຫ້ຕ່ແຖນ ຄືກັບໃນສມັຍໃຫ່ນີ້ ກໍ່ເປັນໄດ້ ເພາະອັນທີ່ເຫັນຜາກົຕ ໃນພິທີນັ້ນກໍ່ແມ່ນການບຊາໃຫ້ແຖນ ແລະພຣະຍານາຄ ບຊາມະເຫສັກດ໌ຫລັກເມືອງ ຄືກັນກັບທີ່ພຣະບາທສົມເດັຈພຣະເຈົ້າມະຫາຊີວິຕລາວຕອນຫລ້ງໆ ໄດ້ຊົງປະກອບກັນຕ່ໆມາ ເຊ່ັນ ໃນງານບຸນພຣະທາຕຫລວງ ທຸກໆປີ ພຣະບາທສົມເດັຈພຣະເຈົ້າມະຫາຊີວິຕ ຈະຊົງປະກອບພິທີ ສາບານນ້ຳຂ້ຣາຊການ ທີ່ວັດອົງຄ໌ຕື້ ແລ້ວກໍ່ໄປໃຫ້ວເຈົ້າແມ່ຫລັກເມືອງທີ່ວັດສຣີເມືອງອີກນ່ໆ.

(5) ເທີດທູນຣິຕຄອງປະເພນີ ເທີດທູນ ກຽຕິຄຸນບັຣພະບຸຣຸສ ແລະກົດໝາຍບ້ານເມືອງ

****

ໃນພຣະຣາຊບາໄສ ແລະໃນພຣະຣາຊໂອງການ ຂອງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ໄດ້ຊົງຜາຣ໌ພເຖິງກຽຕິຄຸນ ຂອງບັຣພະບຸຣຸສລາວ ແລະສິ່ງສັກດ໌ສິທ ທີ່ຊົນຊາຕລາວ ເຄີຍເຄົາຣົພນັບ

ຖືນາແຕ່ກ່ອນ ເຊິ່ງເປັນການສແດງໃຫ້ເຫັນວ່າ ງານປະຕິວັຕຂອງພຣະອົງຄ໌ ແມ່ນການສ້າງ ເສີມຄຸນຄ່າແຫ່ງຄວາມເປັນຊາຕລາວ ແລະເທິດທູນກຽຕິຄຸນ ຂອງບັຣພະບຸຣຸສ ໃນອະດີຕ ໃຫ້ ມີສງ່າຣາສີ ຕລອດກາລະນານ ບ່ແມ່ນການຍຶດອ່ານາຈ ໂດຍທ່າການລົບຖ້ວມທ່າລາຍກຽຕຊື່ສຽງ ຂອງບັຣພະຊົນຊາຕຕົນເອງ ແບບຂົ່ມເພື່ອນຍ່ໂຕ ເຊິ່ງຖືວ່າ "ເປັນນັກປະຕິວັຕທີ່ເມຣະຄຸນ ຕ່ໍຊາຕ"

ການນ່າພາປະເທສຊາຕ ໂດຍໃຫ້ຄວາມສ່ໍາຄັນ ແກ່ບັຣພະບຸຣຸສ ຫລືປະມຸຂທີ່ນາກ່ອນພຣະ ອົງຄ໌ ເປັນຄຸນສົມບັຕ ຂອງນັກການເມືອງ ຫລືຜູ່ນ່າທີ່ດີ ເຊິ່ງຄຸນສົມບັຕສິ່ງນີ້ສົມເດັຈພຣະເຈົ້າຟ້າ ງຸ່ມ ມີຄົບຖ້ວນສົມບູຣນ໌ ໂດຍບ່ໄດ້ຫລົງປະນາທວ່າ ພຣະອົງຄ໌ເປັນນຶ່ງ ແຕ່ພຣະອົງຄ໌ຜຸດຽວ ດັ່ງ ພຣະຣາຊປາໄສ ກ່າວໄວ້ວ່າ... ອັນວ່າ ໃຫ້ລຽງຟ້າລຽງແຖນ ປູ່ເຈົ້າຟ້າຫລວງ ໂງ່ມ ຫາກສິ່ງເຮົາໄວ້ ໃຫ້ເຮົາຮູ້ຈັກຫົວໃຈ ເຈົ້າຂຸນທັງນອນ ໃນເມືອງລ້ານຊ້າງ ຜູ່ຊື່ແລະຜູ່ຄົດ...."

ນັບວ່າ ເປັນລັກສນະຂອງການນ່າພາຊາຕບ້ານເມືອງ ທີ່ມີຄວາມຣັບຮູ ແລະຣັບຜິດຊອບໃນ ຣ່ວງຣອຍຄວາມເປັນນາ ຂອງປະວັຕິສາສຕຣ໌ຕົນເອງ ທີ່ສືບສາຍນາຈາກອະດີຕ ອັນກວ້ໍາໄກ ສ້ໍາໃຫ້ເປັນຕ້ວຢ່ໍາງແກ່ອະນຸຊົນ ພາຍຫລັງ ບ່ໃຫ້ມີການລົບລູ່ດນິ່ນ ໃນກຽຕຂອງບັຣພະຊົນ.

ໃນການນັດຫມາຍວັນກ່ອງປະຊຸມແຫ່ງຊາຕ ທີ່ກ່ໍານົດເອົາເດືອນ 3 ເພັ້ງ ທຸກໆເວລາ 3 ປີ ນັ້ນ ໄດ້ຊົ່ງກ່ໍານົດຣາຊພິທີການລ້ຽງຟ້າລ້ຽງແຖນ ແລະບວງສຣວງພຣະຍານາຄ ໄປພ້ອມກັນ ເຊິ່ງ ຣາຊພິທີ ຄ້ັງນີ້ ເມ່ືອປຽບທຽບ ກັບຍຸຄສມັຍປັຈຈຸບັນ ແລ້ວ ສແດງໃຫ້ເຫັນວ່າ ສົມເດັຈພຣະເຈົ້າ ຟ້າງຸ່ມ ມະຫາຣາຊ ເປັນພຣະມະຫາກະສັຕິຍ໌ ແຫ່ງເຈົ້າຣະບຽບ ແລະໃນນັ້ນ ກ່ໍສແດງໃຫ້ເຫັນ ອີກວ່າ ພຣະອົງຄ໌ ຊົງນ່າພາມະໂຍບາຍ ແຫ່ງການປະຕິວັຕຊາຕ ທີ່ແທ້ຈິງ.

ການໃຊ້ຣາຊພິທີລ້ຽງຟ້າລ້ຽງແຖນນັ້ນ ໃນສມັຍຫລັງ ບັນດາພຣະມະຫາກະສັຕຣິຍ໌ລາວ ທຸກໆ ພຣະອົງຄ໌ ໄດ້ນ່ໍາເອົາພິທີທາງພຸທທະສາສນາ ເຂ້ົ້ามาแทน นับแต่สมัยสมเดจพระเจ้าโพทิ สาຣະຣາຊ ເປັນຕ້ົນมา (ค.ส.1520–1550)

ສ່ໍາຣັບພຣະຣາຊປາໄສ ຂອງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ຖ້ໍາເຮົາເບ່ິງໃນແງ່ຕ່ໍາງໆ ຂອງງານຕ່ໍສູ້ຟ້ືນຟຸຊາຕໂດຍທ່ົວໄປ ກ່ໍພົບວ່ໍา ມີສາຣະສ່ໍາຄັນ ຫລາຍດ້ານ ເຊ່ັน ໃນດ້ານ ນະໂຍ ບາຍການນ່ໍາພາ ແລະຈິຕວິທຍາແຫ່ງການປົກຄອງ ເຊິ່ງຖືເປັນບາທກ້ ວ ໃຫ ມ ່ ຂອງແຜ ່ ນດິນ ໃນສມັຍນັ້ນ ເຫັນມີຄວາມສ່ໍາຄັນ ດ່ັງນ້ີ:

(1) ພຣະຣາຊປາໄສ ຊົ່ງເ ັ ນ ້ ນ ຫ ັ ກເ ົ ງ ໍ ຍ ຊ ະ ອ ັ ນ ຍ ິ ່ ງ ໃ ຫ ່ ຽ ແ ຫ ່ ງ ຊ າ ຕ ໃ ນ ກ ານ ຕ ່ ໍ ສ ້ ູ ຂ ອ ງ ພ ຣ ະ ອ ົ ງ ຄ ໌ ເ ພ ື ່ ອ ກ ານ ທ ອ ້ ນ ໂ ຣ ມ ແ ຜ ່ ນ ດ ິ ນ ທ ີ ່ ກ ະ ແ ຈ ກ ກ ະ ຈ າ ຍ ມ າ ເ ປ ັ ນ ເ ວ ລ າ ເ ົ ງ 600 ກ ວ ່ ໍ າ ປ ີ ແ ລ ະ ໃ ນ ນ ີ ້ ກ ່ ໍ ຊ ົ ງ ເ ັ ນ ້ ເ ົ ງ ໍ ຍ ຊ ະ ພ າ ຍ ໃ ຕ ້ ຣ ะ ບ ອ ບ ก ิ ด ห ม า ย แ ล ะ ก ่ ໍ า ม ิ ด เ ົ ง ໍ อ ุ ด ม ก า ร ห ล ั ก ใ ນ ก า ร ส ื บ ต ่ ໍ

ຊີວິຕປະເທສຊາຕ ຈາກສມັຍອະດີຕ ຮອດຍຸຄຂອງພຣະອົງຄ໌ ແລະຕໍ່ໄປເຖິງອະນາຄົຕ, ສແດງ ໃຫ້ເຫັນວ່າ ພຣະອົງຄ໌ຊົງວາງແຜນ ດວ້ຍກັ່ນກອງ ຢ່າງເລິກເຊິ່ງແລ້ວ ໃນທິສທາງ ແຫ່ງການ ປະຕິວັຕຟື້ນຟູຊາຕ ຄືອີງໃສ່ເປົ້າຫມາຍໃນການນໍາພາບ້ານເມືອງ ຕາມຮູບຮອຍບັຣພະບຸຣຸສ ເຊັ່ນ ຊົງເນັ້ນເຖິງຄໍາສັ່ງ ຂອງ ເຈົ້າຟ້າຫລວງໂງ່ນ ຄື ພຣະເຈົ້າປູ່ ຂອງພຣະອົງຄ໌ ທີ່ເຄີຍປົກຄອງບ້ານ ເມືອງພ່ານມາໃນອະດີຕ ທັງນີ້ ກໍ່ເພື່ອນໍາພາພົລເມືອງລາວໃນຍຸຄໃຫມ່ ໄດ້ເກີດມີສັທທາ ແລະມີ ນໍ້າໃຈເຊື່ອຫມັ້ນຕໍ່ບັຣພະຊົນຂອງຊາຕຕົນເອງ ບໍ່ໃຫ້ລືມຊາຕ ປະນາທເຊື້ອ. ນີ້ແມ່ນນະໂຍບາຍ ທີ່ສລຽວສລາດ ທີ່ນໍາໄປຫາການຍຶດຖືແບບແຜນ ໃນຫມູ່ເຈົ້າຂຸນມຸນນາຍ ຜູ້ມີອໍານາຈ ໃຫ້ຢູ່ໃນ ຫລັກເກນທ໌ການປົກຄອງ ທີ່ດີ ຮູ້ຈັກຮັກສາຄວາມເປັນເອກພາພ ແຫ່ງຊາຕ ເພື່ອໃຫ້ເກີດຄວາມ ເປັນຣະບຽບຮຽບຮ້ອຍ ໃນການປົກຄອງເວົ້າສະເພາະແລ້ວ ກໍ່ຄື ບໍ່ໃຫ້ຜູ້ນໍາບ້ານເມືອງ ໃນພາຍໜ້າ ພາຍລຸນ ພາກັນລະຮີຕໜມອງ ລະຄອງເສົ້າ ນັ້ນເອງ.

(2) ພຣະຣາຊປາໄສ ຊົງເນັ້ນຫນັກເຖິງຣະບຽບກົດຫມາຍ ຄືຫມາຍຄວາມວ່າ ຣະບອບ ການປົກຄອງໃຫມ່ ທີ່ພຣະອົງຄ໌ສະຖາປະນາຂຶ້ນ ນັ້ນ ໄດ້ຮັບການຄໍ້າປະກັນຄວາມເປັນທັມ ຢ່າງພຽງພໍ, ຊົງສແດງໃຫ້ເຫັນວ່າພົລເມືອງທຸກຄົນທີ່ຢູ່ພາຍໃຕ້ອໍານາຈການປົກຄອງນີ້ ຈະບໍ່ຖືກ ຂົ່ນເຫັງ ແບບໄຮ້ສີລທັມ, ທຸກໆຄົນ ຈະໄດ້ຮັບຄວາມອົບອຸ່ນ ມີຄວາມເພິ່ງພໍໃຈ ແລະເຊື່ອຖືໄດ້ໃນ ການດໍາຣົງຊີວິຕຂອງຕົນ. ຣະບອບການປົກຄອງນີ້ ບໍ່ມີການຈໍາກັດຮັດແຄບດວ້ຍອະພິສີທໃດໆ ດັ່ງພຣະຣາຊໂອງການບົ່ງໄວ້ ຄື:

(ກ) ໃຫ້ທຸກຄົນ ຖືຣະບຽບກົດຫມາຍເປັນຫລັກ ແມ່ນຈະມີຖານະຕໍ່າ ຫລືມີຖານະສູງ ກໍ່ຕາມ ເຊັ່ນ ແມ່ນວ່າ ຂອ້ຍຕົນເອງຜິດ ກໍ່ດີ (ຂອ້ຍ ຖືວ່າຜູ່ຕໍ່າທີ່ສຸດ) ຫລືເມັ່ຽຕົນເອງຜິດ ກໍດີ (ເມັ່ຽ ຖືວ່າ ຜູ່ທີ່ຕົນຮັກທີ່ສຸດ) ຜູ່ໃດຈະຜິດຈະຖືກ ບໍ່ມີຜູ່ໃດຕັດສິນໂທສ ໂດຍພະລະການ ຈະຕອ້ງໃຫ້ຜູ່ອື່ນ ພິຈາ ຣະນາດູກອ່ນ ຄືໃຫ້ໃຊ້ຣະບົບການພິພາກສາ ເປັນຫລັກ. (ຫມາຍຄວາມວ່າ ໃຫ້ຂຶ້ນກັບສາລ) ຄື ດັ່ງບົທບັນຍັຕທີ່ວ່າ ...ເປັນໂທສອັນຫນັກ ໃຫ້ກະທໍາຕາມເຫຕນັ້ນ ໂທສບໍ່ຫນັກຢ່າໃຫ້ຂ້າ ຫ່ວ່າໃຫ້ ໃສ່ຄອກຂັງໄວ້ ສົມໂທສແລ້ວໃຫ້ປ່ອຍໄປຫາວຽກຫາການ....

(ຂ) ໃນບ້ານເມືອງລ້ານຊ້າງ ຫ້າມບໍ່ໃຫ້ມີຂ້າລັກຄົນໂຈຣ ຫມາຍຄວາມວ່າ ພົລເມືອງລາວ ໃນ ປະເທສລ້ານຊ້າງ ຈະບໍ່ຖືກຂົ່ນຂູ່ຫລືເສັ່ຽຂວັນ ຍອ້ນການປຸ້ນການລັກ ຫລືການສໍ້ໂກງກິນກັນ ແລະ ບໍ່ໃຫ້ຄົນລາວ ເປັນຄົນມືໄວ ໃຈງ່ຍ ລັກຢູ່ລັກກິນ ໂດຍບໍ່ເຮັດບໍ່ສ້າງ.

(ຄ) ຊີວິຕຂອງພົລເມືອງລາວ ໃນຣະບອບການປົກຄອງຂອງພຣະອົງຄ໌ ໄດ້ຖືກຄໍ້າປະກັນໃຫ້ໄດ້ ຮັບຄວາມເປັນທັມ ຈະບໍ່ມີຜູ່ມີອໍານາຈ ຫລືຜູ່ມີເງິນໃດໆ ທີ່ສາມາຕຖ໌ບັງຄັບເອົາປະຊາຊົນລາວ ໄປ ເປັນຂອ້ຍຂ້າ ໂດຍພະລະການ ດັ່ງພຣະຣາຊໂອງການທີ່ວ່າ.."ຢ່າເອົາໄພ່ ເມັ່ຽເປັນຂອ້ຍ ໄພ່ຜິດກັນໜັກ ເປັນຕົ້ນວ່າ ຫລົ້ມຜູ້ສູ່ເມັ່ຽທ່ານ ໃຫ້ໄໝເອົາ ແຕ່ 5 ບາທ, ຖ້າເຂົ້າຂ້າກັນຕາຍ ໃຫ້ເອົາຕົວມັນ ແທນຜູ່ນັ້ນ.

ໃນສມັຍໂບຣານນັ້ນ ບ່ວ່າແຕ່ລາວ ຫລືແຫ່ງໃດ ກ່ມີກ່ານົດຫລັກການໄວ້ຄືກັນ ກ່ຽວກັບຄະດີ ອາຊຍາ ແລະໂທສການຂ້າຄົນ ໂດຍທົ່ວໄປແລ້ວ ເພີ່ນໃຫ້ເອົາ ຕາແທນຕາ, ມືແທນມື ຂາ ແທນ ຂາ ແລະຕົວແທນຕົວ ທັ້ງນັ້ນ ເພາະຖືວ່າ ມີຄວາມຍຸຕິທັມ.

(1) ການຕັດສິນຄວາມຜິດຄວາມຖືກໃດໆ ທີ່ກະທ່າຕໍ່ພົລເມືອງລາວ ຕອ້ງມີກ່ານົດກົດເກນ ມີຣະບຽບຫລັກການ ເຊັ່ນວ່າ ຫ້ັນບ່ໃຫ້ຂຸນ ໂທນໃພ່ ເກີນກວ່າ 100 ບາທຂຶ້ນໄປ ຖ້າຜູ່ໃດຂຶ້ນໂທນ ຈະເສັ້ງ ຫນ້າ ຕ໋ອນັ້ນ ຈັກເອົາໃຊ້ຕາງໃພ່ ເປັນຕົ້ນ ເຊ່ິງເປັນພຣະຣາຊດ່ໍາຣັສ ທີ່ໃຊ້ເປັນກົດຫມາຍ.

(3) ພຣະຣາຊປ່າໄສ ເນັ້ນໜັກໃສ່ຄວາມສງົບຣຽບຣອ້ຍໃນການປົກຄອງ ແລະນະໂຍບາຍ ການເມືອງພາຍໃນ ເຊ່ັນ ຊ່ງເນັ້ນເຖ່ງຄວາມຫມັ້ນຄົງ ແລະຄວາມປອດພັຍ ພາຍໃນປະເທສ ເປັນ ບັນຫາສ່ໍາຄັນ ຄືແນະນ່ໍາໃຫ້ພວກເຈ້ົາຂຸນມຸນນາຍ ແລະນັກປົກຄອງໃນທອ້ງຖ່ິນພຣະຣາຊອານາ ເຂຕປະເທລ້ານຊ້ວ ໃຫ້ພາກັນປົກປັກຮັກສາຂອບບ້ານແດນເມືອງ ຂອງຕົນເອງ ແລະຢ່າໄດ້ຜິດ ຂອ້ງຕອ້ງຖຽງກັນເອງ ດັ່ງພຣະຣາຊດ່ໍາຣັສ ຊ່ງກ່າວໄວ້ວ່າ... "ພວກເຈ້ົາທັ້ງຫລາຍ ຢ່ໍາໄດ້ຜິດ ຢ່ໍາໄດ້ຂ້ໍາກັນ ເອງໃຫ້ພອ້ມພາກັນ ປົກປອ້ງຮັກສາຂອບບ້ານແດນເມືອງ ໃຫ້ສອດສ່ອງເບ່ິງພວກຕ່າງບ້ານຕ່າງເມືອງ ເຂ້ົາຈັກກະທ່ໍາ ປຸ້ນປຸ້ນບ້ານເມືອງເຮ້ົາ ຈ່ົງໄດ້ພາກັນເຫັນແລ້ວ"

ບົທປະພັນທ໌ ໃນຫນັງສືສັງຂ໌ສິລປ໌ໄຊ ເຊ່ິງເປັນວັນນະກັມຊັ້ນຍອດ ຂອງລາວ ໃນສັຕວັສທ 16 ໄດ້ສະທອ້ນໃຫ້ເຫັນຣະບົບປຣັຊຍາ ໃນຣະບອບການປົກຄອງ ລາວ ທີ່ສແດງເຖ່ງແນວຄ໊ດໃນການ ຕິ່ດ່ໍາພົລເມືອງ ທີ່ມີຕ່ໍຣະບອບການປົກຄອງຊາຕ ໂດຍຖືວ່າ ພ້ືນຖານປະຊາຊ່ົນ ທີ່ມີຕ່ໍອ່ານາຈການ ປົກຄອງນັ້ນ ເຫມ່ືອນຣາກໄມ້ ກັບຕ້ົນໄມ້ ຖ້ວ່າຣາກໄມ້ນັ້ນ ບ່ໝັ້ນບ່ແກ່ນ ກ່ຈະພາໃຫ້ຕ້ົນໄມ້ນັ້ນ ແຫ້ງຫຽ່ວ ຫລ໊ົ້ມຕາຍໄປເອງ ເຊ່ັນຂ໊ໍ້ຄວາມທ່ີວ່າ

+ ອັນວ່າ ໂຍເທສຣ໌ ທ້ົວ ທຸກທ່ົວແດນດ່ິນ ໃຫ້ຮ່ໍາ ປ່ິປ້ວຍເຫມ່ືອນ ຣາກຮອ້ງພາຍພ້ືນ
ອັນວ່າ ເສນ້ົາເຫນ້ົ້າ ມ່ີຄຸນຄອ້ງປະເສ່ິຕ ເລ່ືອກຜູ່ແກ້ວປຸນໄວ້ ດ່ັງລ່ໍາ
ສ່ວນວ່າ ເສເນສຣ໌ ນ້ອ້ຍ ເອ້ົາແອບຕ້ົາຕ້ົາ ປຸນດ່ັງ ເປ້ັນສ້ົາຂ້ົາ ວ້ົ້ົາວ້ົ້ົາມ ຣະວ້ັງໄວ້
ອ້ົາຄ໌ກະສ້ັຕຣ໌ຍ໌ໃຫ້ ເປ້ັນຈອມຍ້ົາຍອດ ຣະດູແຜ່ຜ້ົ້ົ ຝ່ົນລ້ົ້ມ ລຸ່ມເທ້ົ້ົ
ຣ໌ິສ ແຜ່ຟ້ົ້ົ ຕລ໊ົບຣອດດ່ິນແດນ ພ້ົ້ົາຄະນ້ົ້ົາສ້ັຕ ຊອບຊຸ່ມ ຊ່ົ້ມເຮ້ົ້ົ
ອ້ັນນ໊ີ ຍະຖ້ົ້ົາແທ້ ທ້ັມມ້ຽມປຸນປ້ຽບ ຄ້ັນວ່ົ້ົ ຣ້ົ້ົາກ່ໍໝ້ັ້ນ ພ້ົ້ົາຕ໊ົ້ນຕຸ່ນຕ້ົ້ົາຍ ແທ້ແລ້ວ.

ຄວາມຫມາຍກ່ໍ໊ຕິ: ພົລເມືອງທ່ົ້ວປະເທສ ລາວ ປຽບເຫມ່ືອນຣາກຂອງຕ້ົ້ນໄມ້ ສ່ວນທ້ົ້ວຂຸນ ຫລືພວກຂ້ົ້ົາຣາຊການ ຊ້ັ້ນສູງ ທ້ົ້ງຜູ່ນຸ່້ມ ຜູ່ແກ່ ຜູ່ມ່ີປະສ໊ົບການ ແລະມ່ີຄວາມຮູ້ ມ່ີຄວາມເຂ້ັ້ມແຂງນ້ັ້ນ ປຽບເຫມ່ືອນ ລ່ໍາຕ້ົ້ນ ຂອງໄມ້ນ້ັ້ນເອງ, ອ້ັນ ຂ້ົ້ົາຣາຊການຊ້ັ້ນຜູ່ນ້ອ້ຍໂດຍທ່ົ້ວໄປ ປຽບເຫມ່ືອນ ກ່ິ່ງງ່ົ້ົາຂອງຕ້ົ້ນໄມ້ ສ່ໍາຣ້ັບພຣະມະຫ້ົ້ົາກະສ້ັຕຣ໌ຍ໌ ຜູ່ນ່ໍ້ົ ຫລືປະມຸຂ ຂອງ

ປະເທສນັ້ນ ເປັນຄື "ຍອດໄມ້" ຖ້າຫາກວ່າ ຣາກໄມ້ ບໍ່ໜັ້ນ ບໍ່ແກ່ນ ລຳຕົ້ນ ແລະຍອດໄມ້ ກໍຈະຕາຍໄປໜົດ.

ບົດປະພັນທ໌ ນີ້ ສແດງໃຫ້ເຫັນ ຣະບົບແນວຄຶດ ຂອງການປົກຄອງລາວ ທີ່ມີມາແຕ່ຍຸຄໂບຣານ ແລະບາງທີ ກໍ່ແມ່ນໃນສມັຍຟ້າງຸ່ມ ຫລືກອ່ນໜ້ານັ້ນ ກໍ່ໄດ້, ສະນັ້ນ ນັກປົກຄອງລາວ ທີ່ດີ ຈຶ່ງຖືວ່າ ຕອ້ງຫມາຍເຖິງ "ທຸ່ມີສິລທັມ" ຫລືທີ່ເອີ້ນກັນວ່າ "ທົສພິທະຣາຊທັມ 10 ປະການ" ຄື:

(1) ທານະ ປະມຸຂຫລືທຸ່ນ່ຳ ຕອ້ງມີຄວາມເຜື່ອແຜ່ ມີຫົວໃຈເພື່ອການໃຫ້

(2) ສິລະ ປະມຸຂຫລືທຸ່ນ່ຳ ຕອ້ງມີສິລ ມີທັມ ບໍ່ແມ່ນອັນທະພານ ຫລືນັກທ່ຣະຍົສ ຄົດລ້ຽວ ຫລືນັກຕົ້ມ ນັກຫລອກລວງ.

(3) ປະຣິຈາຄະ ປະມຸຂຫລືທຸ່ນ່ຳ ຕອ້ງມີການເສັ້ຽສລະ ບໍ່ເຫັນແກ່ຕົວ ໃຫ້ອະພັຍຕໍ່ທຸ່ອື່ນໄດ້

(4) ອາຊະວະ ປະມຸຂຫລືທຸ່ນ່ຳ ຕອ້ງເປັນຄົນຊື່ກົງ ບໍ່ຫລົບລີ້ນປີ້ນຄວາມງ່າຍ.

(5) ມັທທະວະ ປະມຸຂຫລືທຸ່ນ່ຳ ຕອ້ງມີຄວາມສຸພາພ ອ່ອນຫວານ ບໍ່ແມ່ນຄົນແຂງກະດ້າງ ຫຽາບຊ້າ ເຈົ້ານັກເລງຫົວແຂງ ເປັນຕົ້ນ.

(6) ຕະປະ ປະມຸຂຫລືທຸ່ນ່ຳ ຕອ້ງເປັນຄົນຂຍັນຂັນແຂງ ບໍ່ຂີ້ຄ້ານ ຫລ້ຽງ່າວ

(7) ອັກໂກທະ ປະມຸຂຫລືທຸ່ນ່ຳ ຕອ້ງເປັນຄົນ ບໍ່ຖືໂກທຕໍ່ປະຊາຊົນ ຫລືເຈົ້າອາຣົມຍ໌

(8) ອະວິຫິງສະ ປະມຸຂຫລືທຸ່ນ່ຳ ຕອ້ງບໍ່ມີຈິຕໃຈ ນັກຂົ່ມເຫັ່ງ ແລະບຽດບຽນທຸ່ອື່ນ

(9) ຂັນຕິ ປະມຸຂຫລືທຸ່ນ່ຳ ຕອ້ງມີໃຈຫນັກແຫນ້ນ ແລະອົດທົນ

(10) ອະວິໂຣທະນະ ປະມຸຂຫລືທຸ່ນ່ຳ ຕອ້ງຮັກສາຄວາມຍຸຕິທັມ ໃຫ້ທຸ່ນທ່ຽງສເມີ.

(6) ນະໂຍບາຍການປົກຄອງຊົນເຜ່ົາ ແລະສິທທິໃນການປົກຄອງຕົນເອງ ຂອງຊົນເຜ່ົາ

✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲

ທຸກໆປະເທສ ໃນໂລກຕ່າງກໍ່ມີພວກຊົນເຜ່ົານອ້ຍ ແຊກຊອ້ນອາສັຍຢູ່ໃນດິນແດນ ບອ່ນນອ້ຍ ບອ່ນຫລາຍ ເປັນຂອງທັມນະດາ, ເຊ່ິງໂດຍກົດເກນທົ່ວໆໄປ ຊົນເຜ່ົານອ້ຍ ຍອ່ມຂຶ້ນກັບຊົນຊາຕ ສ່ວນໃຫຍ່ ໃນປະເທສນັ້ນໆ ແລະຢູ່ຮ່ວມກັນ ໂດຍສັນຕິວິທີ.

ຢູ່ໃນປະເທສລາ້ນຊ້າງ ສມັຍກອ່ນ ກໍ່ມີຢູ່ບາງຊົນເຜ່ົາ ເທ້ົາທີ່ພາກິຕໃນສມັຍພຣະເຈົ້າຟ້າງຸ່ມ ມະຫາຣາຊນັ້ນ ທີ່ເຫັນໃນພົ້ງສາວະດານ ມີແຕ່ຊົນພວກ" ຂ້າເກ່ົາ" ພວກຂອມກັນຣາ ຄືຊົນເຜ່ົາ ຂະມຸ ທີ່ເອີ້ນວ່າ"ພວກອ້າຍກົກ ຂອງຊາຕລາວ" ຍັງບໍ່ເຫັນມີບັນທຶກກ່ຽວກັບພວກແມ້ວ ພວກຢ້ວ ມຸເຊ ອີກ້ ລັນແຕນ ໂດຍສະເພາະທີ່ພາກິຕມີບັນທຶກໄວ້ແຈ້ງທີ່ສຸດ ກໍ່ແມ່ນຊົນເຜ່ົາແມ້ວ ທີ່ອົພຍົບ

ມາຈາກຈີນ ທີ່ເປັນຊະບວນໃຫຽ ຣະຫວ່າງ 100 ກວ່າປີ ຜ່ານມານີ້ (ຄ.ສ.1872–1887) ຈາກສມັຍ ຂະບົດໄຕເພ້ງ(Teiping Rebellion) ແລະໃນນ່ຳໆມານີ້ ກໍ່ມີບາງຄົນ ນ່ຳພາປະກາສປຽ່ນຊື່ພວກ ຂາເຈົ້າເສັຽໃຫ່ມວ່າ "ມົ້ງ" ແລະກຳນົດບອກຄຳແປໄວ້ວ່າ "ອິສຣະຊົນ" ຫລື "ຊົນຊາຕເອກຣາຊ"

ການອົພຍົພ ຂອງຊົນເຜ່ົາແມ້ວ ມາໃນສມັຍທີ່ອານາຈັກຣ່ານຊ້ວ ເສັຽເອກຣາຊ ໃຫ້ແກ່ປະ ເທສສຍາມ ໄປແລ້ວ ແລະບ່ມີສິທກຳນົດນະໂຍບາຍການປົກຄອງ ໃນຄວາມຜິດຄວາມຖືກໃດໆ ທີ່ ມີຕ່ໍຊົນເຜ່ົາອື່ນໆ ຫລືເຜ່ົາມົ້ງ ທີ່ໄດ້ອົພຍົພໂຕນຫນີເຂົ້ົ້ามา ຂ່ໍຢູ່ໃນປະເທສລາວ ສມັຍນັ້ນ.

ໃນການສົ້ງຄາມທີ່ປະເທສລ້ານຊ້ວ ແລະປະຊາຊົນລາວ ໄດ້ທຸ້ມເທເລືອດເນ້ືອແລະຊີວິຕ ຕ່ໍສູ້ ປອ້ງກັນແຜ່ນດິນນີ້ ອັນເນ່ືອງມາຈາກຖືກຮຸກຮານ ຈາກສຍາມ ໃນປີ 1778 ແລະປີ 1827 ແລະ ຕ່ໍ ມາ ກ່ໍຖືກຮຸກຮານຈາກວຽດນາມ ແຕ່ປີ 1948 ຈົນມາເຖ່ິງສມັຍອະເມຣິກັນ ເຂົ້ົ້ามາກ່ຽວຂອ້ງ ໃນ ສົ້ງຄາມອິນດູຈີນ ແທນຝຣ່ັ້ງເສສ ແຕ່ປີ 1962 ຈ່ົ້ງໄດ້ມີພວກຊົນເຜ່ົາມົ້ງ ທີ່ມີຢູ່ ໃນເຂຕພາຄເໜ ືອ ໄດ້ຜາກຕ ິ ຊ ່ ເຂ ົ ້ ົ ້ າເປ ັ ນທະຫານຮ ັ ບຈ ້ ົ ້ ງ (SGU) ປ ະ ເ ທ ສ ລ າ ວ ຈ ່ ົ ້ ງ ຜ າ ກ ິ ຕ ໄ ດ ້ ຮ ັ ບ ກ ານ ຮ ່ ວ ມ ມ ື ກ ວ ້ ົ ້ ງ ຂວ ້ ົ ້ ງ ອ ອ ກ ໄ ປ ຈ າ ກ ຫ ລ າ ຍ ຊ ົ ນ ເ ຜ ່ ົ ້ ົ ້ ົ ້

ອ່ານວ່າ ຂຸນຣາດ) ເວລານັ້ນ ມີຈຳນວນ 4 ທ່ານ ແລະ ວິທີການປົກຄອງຕົນເອງ ຂອງພວກຂຸນ ຣາສດຣ ໃນເວລານັ້ນ ພຣະເຈົ້າແຜ່ນດິນລາວ ໄດ້ມອບອຳນາຈ ບັງຄັບກັນເອງໄຫ້ພ້ອມ ດັ່ງພຣະ ຣາຊປາໄສ ມີດັ່ງຕໍ່ໄປນີ້:

"..." ຜູ່ໃດ ຫາກບໍ່ຟັງຄວາມກູສັ່ງ (ຄືດັ່ງທີ່ກ່າວໄວ້ເບື້ອງເທິງນັ້ນ) ທີນນ້ອຍນີ້ ກູເອົາແຕ່ສິບຄານ ຊ້າງດ້ງຊ້າງທອງພຸ້ນ ມາໄວ້ແກ່ສູນີ້ ແລະທີນນ້ອຍນີ້ ໜັກ 2500 ບາທ ຜູ່ໃດຫາກບໍ່ຟັງຄວາມກູ ອັນເປັນເຈົ້າແຜ່ນ ດິນຊ້າງດ້ງຊ້າງທອງນີ້ ໃຫ້ສູທັ້ງ 4 ຂຸນຣາສດຣ ນີ້ ຊັ່ງເອົາເງິນ ທ່ທີນນ້ອຍນີ້ ເລົ່າເອົາຄວາຍຕົວນຶ່ງກິນແກ່ສູ....

ການກຳນົດຈັນເຣັດເສິກໃຫ້ ພວກຊົນເຜົ່າ ຣະຫວ່າງ 5 ປີ ໃນເວລາ 10 ຈົ່ງໃຫ້ການອະນຸຍາຕ ຄັ້ງນຶ່ງນັ້ນ ຖືເປັນ ແນວຄຶດທີ່ແປກ ແຕ່ກໍ່ມີເຫຕຜົລທີ່ຄວນສຶກສາ ຄື:

(1) ຈະພາໃຫ້ມີການຜ່ອນຂໍ້ຂັດແຍ່ງໄດ້ ເພາະຫາກມີການຂັດແຍ່ງກັນຂຶ້ນ ໃນຫມູ່ຊົນເຜົ່າ ດຽວກັນ ກໍ່ດີ ຫລືຣະຫວ່າງຊົນເຜົ່ານຶ່ງ ກັບຊົນເຜົ່ານຶ່ງ ກໍ່ດີ ການທີ່ພຣະເຈົ້າແຜ່ນດິນລາວ ມີຂໍ້ບັງ ຄັບໄວ້ ເຊັ່ນນັ້ນ ນອກຈາກການຜິດຂ້ອງຕ້ອງຖຽງກັນ ຣະຫວ່າງຊົນເຜົ່າ ຈະໄດ້ຮັບຄວາມບໍ່ສະ ດວກແລະບໍ່ໄດ້ຮັບການສົ່ງເສີມ ຫລືການສນັບສນຸນ ຈາກທາງຣາຊການ ຂອງລາວແລ້ວ ດີບໍ່ດີ ພວກຕົນ ກໍ່ອາຈປັບໄຫມ ເສັຽເງິນ 2500 ບາທ ຕື່ນອີກ ຫລືບາງທີ ຖ້າບໍ່ຟັງອາຈຖືກຜາບ ກໍ່ໄດ້.

(2) ພາໃຫ້ພຣະເຈົ້າແຜ່ນດິນລ້ານຊ້າງ ຮູ້ເຫຕການນ໌ລ່ວງຫນ້າ ແລະຫາທາງແກ້ໄຂໄດ້ທັນ ກັບເຫຕການ ທີ່ອາຈເກີດຂຶ້ນ ນັ້ນໄດ້.

(3) ເປັນການລົດຜ່ອນບັນຫາພາຍໃນປະເທສລ້ານຊ້າງເອງ ບໍ່ໃຫ້ມີການປະເຊີນກັບຄວາມ ຫຽ້ຍຍາກ ທີ່ເກີດມາຈາກຂໍ້ຂັດແຍ່ງໃນຫມູ່ຊົນເຜົ່າ.

ຄຳວ່າ ມື້ເສິກ ຄື: ມື້ກາບ ມື້ຮັບ ມື້ຮອາຍ ມື້ເມິງ ແລະມື້ເບີກ ຫມາຍເຖິງ ແມ່ປີ ໃນຣະບົບລາວໂບຮານ ທີ ຫມາຍເຖິງ ປີ ກາບໄຈ້= ແມ່ນປີຊວດ, ຮັບເປົ້າ= ປີສລຸ, ຮອາຍຍີ= ປີຂາລ, ເມິງເຫມົ້າ=ປີເຖາະ,ເບີກສີ= ປີມະໂຣງ ...ທັ້ງ 5 ມື້ນີ້ ແມ່ນ ມື້ອະນຸຍາຕໃຫ້ເຮັດເສິກໄດ້, ສ່ວນມື້ ກັດ ມື້ກົດ ມື້ຮ່ວ ມື້ເຕົ່າ ມື້ກ່າ ຄືຫມາຍເຖິງມື້ ກັດໄສ້= ມະເສງ, ກົດສະງ້າ = ມະມີ,ຮ່ວງນົດ=ມະແມ, ເຕົ່າສັນ=ປີວອກ, ແລະ ມື້ກາເຮົ້າ=ຣະກາ...ທັ້ງ 5ມື້ ນີ້ ເປັນມື້ທີ່ຫ້າມ ບໍ່ໃຫ້ເຮັດເສິກກັນເອງ.

ການຍົກຖານະຊົນເຜົ່ານ້ອຍ ໃຫ້ເທົ່າທຽມ ກັບຊົນຊາຕລາວ ໃນສມັຍຟ້າງຸ່ມ

****

ໃນການຢູ່ຮ່ວມກັນ ເປັນຊາຕເປັນປະເທສ ມີຜືນແຜ່ນດິນດຽວກັນ ຣະຫວ່າງມະນຸສ ນັ້ນ ການ ຢູ່ຮ່ວມກັນ ໂດຍສັນຕິ ແມ່ນຄວາມປາຖນາຂອງໂລກ ສະນັ້ນ ສັງຄົມໂລກ ເພີ່ນຈຶ່ງມີຄຳພາສາໃຊ້

ກ່ຽວກັບການກໍ່ສ້າງສັນຕິວິທີ ໃນການຢູ່ຮ່ວມກັນ ໂດຍໃຊ້ຄຳວ່າ ພະ-ຣາ-ດອຣ-ພາພ- ຄືການຮັບຮູ້ຄວາມເປັນພີ່ເປັນນ້ອງກັນ ຣະຫວ່າງມວນມະນຸສ **(Brotherhood)** ແຕ່ ການຢູ່ຮ່ວມກັນ ແບບສັນຕິວິທີ ນີ້ ບໍ່ແມ່ນການສ້າງໄດ້ງ່າຍ ຕ້ອງອາສັຍການສຶກສາ ແລະປັບປຸງຄວາມຮູ້ ຄວາມເຂົ້າໃຈກັນ ຣະຫວ່າງຄົນໃນຊາຕ ຂອງແຕ່ລະປະເທສ ນັ້ນ ເປັນຫລັກ ນອກນັ້ນ ກໍ່ແມ່ນຕ້ອງອາສັຍການຈັດຣະບົບການເປັນຢູ່ ຮ່ວມກັນໃຫ້ມີຄວາມເຫມາະສົມ ອີກດ້ວຍ.

ຢູ່ໃນປະເທສລາວ ຫລັງຈາກການແຕກແຍກຂອງລ້ານຊ້າງ ໃນປີ 1707 ມານັ້ນ ແລ້ວ ຂໍ້ຂັດແຍ່ງພາຍໃນລາວ ກໍ່ມີຂຶ້ນຕິດຕາມມາຢ່າງຕໍ່ເນື່ອງ ມີການແຍກພວກ ແຍກພາຄ ແລະແຍກເຜົ່າກັນ ຈຸ້ນວາຍທີ່ສຸດ, ຕໍ່ມາເມື່ອເສັ້ງເອກຣາຊ ແກ່ສຍາມອີກ ໃນປີ 1779 ສະພາພການປົກຄອງພາຍໃນ ກໍ່ຍິ່ງອ່ອນແອລົງ ຫລັງຈາກການລຸກຂຶ້ນກູ້ຊາຕ ບໍ່ສຳເຣັດ ໃນສມັຍ ສົມເດັຈພຣະເຈົ້າອະນຸ ໆ ໃນປີ 1827 ບ້ານເມືອງ ກໍ່ຖືກເຜົາຜລານ ແລະຖືກຍຶດຄອງ ແລະແບ່ງແຍກກັນຈົນລ້ານຊ້າງ ວຽງຈັນທນ ຫາຍສາບສູນຍໄປ ຈາກຫນ້າປະວັຕິສາສຕຣ ຂອງໂລກ ໃນສມັຍນັ້ນ, ຄັນມາຮອດປີ 1893 ຈາກຟິລທີ່ຝຣັ່ງເສສ ອັງກລິສ ສະເປນແລະປໍຣຕຸເກຕ ທີ່ພາກັນຍາດແຍ່ງອຳນາຈກັນ ໃນໂລກ ປະເທສສຍາມ ຢູ່ໃນຣະຫວ່າງການຖືກຍາດແຍ່ງ ຣະຫວ່າງຝຣັ່ງເສສ ກັບອັງກລິສ, ອານາຈັກຣ໌ລ້ານຊ້າງຫລວງພຣະບາງ ຂອງລາວທີ່ຍັງເຫລືອຊີວິຕຢູ່ ແລະຂຶ້ນກັບອຳນາຈຂອງສຍາມ ເວລານັ້ນ ກໍ່ຢູ່ໃນຈຳນວນພຸດຜິລປໂຍຊນ ທີ່ສຍາມກັບຝຣັ່ງເສສ ນຳໄປຕໍ່ລອງແລະແບ່ງປັນກັນເອງ ປະເທສລາວເຮົາ ຈຶ່ງຖືກແບ່ງແຍກ ກັນອອກເປັນ 2 ຝ່າຍ ຄື ລາວສຍາມ (**Siames Laos)** ແລະລາວຝຣັ່ງເສສ **(French Laos)**

ການແບ່ງແຍກລາວ ອອກເປັນ 2 ຝັ່ງແມ່ນ້ຳຂອງນັ້ນ ລາວຝ່າຍທີ່ຂຶ້ນກັບສຍາມ ເວລານັ້ນ ເປັນລາວຈຳນວນຫລາຍ ຄືມີເຖິງ 4,000,000 ຄົນ ສ່ວນຢູ່ທາງຝັ່ງຕາວັນອອກ ມີພຽງ 1,500,000 ຄົນ, ນີ້ແມ່ນອີງໃສ່ລາຍງານ ຂອງທ່ານປາຣ໌ຄມັງເຈ (**Parkmantier**) ທີ່ຂຽນໄວ້ ໃນ ປີ 1949 (1) ຕົວເລຂທີ່ກ່າວນີ້ ສແດງໃຫ້ເຫັນວ່າ ປະເທສລາວເຮົາໃນສມັຍຝຣັ່ງເສສ ມີພົລເມືອງລາວແທ້ 65 ເປີເຊັນທ໌, ສ່ວນຄົນເຜົ່າອື່ນ ມີ 35 ເປີເຊັນທ໌ ໃນນັ້ນ ສະຖິຕິຈາກທາງການ ຂອງຣັຕຖະບານລາວ ອອກ ໃນປີ 1974 ມີພົລເມືອງທີ່ເປັນແມ້ວ ປະມານຈຳນວນ 262,000 ຄົນ ໃນຈຳນວນພົລເມືອງລາວ 3,500,000 ຄົນ, ສ່ວນ ຊົນເຜົ່າລາວເທິງ ເຊິ່ງເປັນຊົນເຜົ່າ ກະແຈກກະຈາຍຫລາຍພວກ ຢູ່ໃນສມັຍອະດີຕ ນັ້ນກໍ່ໄດ້ຖືກປັບປຸງວັທທະນະທັມ ປະເພນີ ເຂົ້າເປັນຊົນຊາຕລາວ ໂດຍຣັຕຖະ

(1) Robert Asghelmann France Illustration Vol. 350 Juin 28th 1952 " le Laos entree le regime pratriacal et la Democratie "

ບາລ ສມັຍເອກຣາຊ ແຕ່ 1949 ເປັນຕົ້ນມາ ກໍ່ຫມົດສະພາບຄວາມເປັນ "ຂ້າ "ໄປສ່ວນຫລາຍ.

ເຖິງຢ່າງໃດກໍ່ຕາມ ໃນສະພາພທີ່ປະເທສລ້ານຊ້າງ ນັບແຕ່ສມັຍແຕກແຍກກັນ ເປັນ 3 ອາ ນາຈັກຣ ໃນປີ 1707 ນັ້ນ ຈົນຮອດປີ 1949 ນ່ຳນີ້ ກໍ່ບໍ່ມີໂອກາສໃນການປັບປຸງຕົນເອງ ມີແຕ່ຖືກ ຄວບຄຸມບັງຄັບ ໂດຍຄົນສຍາມ ແລະຝຣັ່ງເສສ ຕລອດມາ.

ອີກຢ່າງນຶ່ງ ໃນສະພາພຫົວເມືອງຂຶ້ນຂອງຕ່າງຊາຕນັ້ນ ນະໂຍບາຍການແບ່ງແຍກ ເພື່ອປົກ ຄອງ ກໍ່ເປັນນະໂຍບາຍຫລັກ ຂອງນັກປົກຄອງຫົວເມືອງຂຶ້ນ ທຸກໆສມັຍ.

ສະນັ້ນ ປະເທສລາວ ຈຶ່ງບໍ່ມີໂອກາສປັບປຸງຊີວິຕຄວາມເປັນຢູ່ ໃນບັນດາຊົນເຜົ່າໃນຊາຕຂອງ ຕົນເອງ ແມ່ນແຕ່ຄົນລາວເອງ ກໍ່ຍັງໄດ້ແບ່ງແຍກແນວຄຶດຈິຕໃຈກັນເປັນລາວໃຕ້-ລາວເຫນືອ ຕ່ລອງກັນເອງ ຈົນເຂົ້າກັນບໍ່ໄດ້ ເຖິງກັບ ປີ 1946 ທາງຝຣັ່ງເສສ ຈຶ່ງແນະນ່ຳ ໃຫ້ມີຂໍ້ຕົກລົງພິ ເສສຂຶ້ນ ຣະຫວ່າງລາວເຫນືອ ກັບລາວໃຕ້ ທີ່ເອີ້ນວ່າ **Modus Vivendi** ວັນທີ 27 ສິງຫາ 1946 ຄືຣະຫວ່າງເຈົ້ານະຄອຣຈຳປາສັກ ທີ່ຈະເຂົ້າຮ່ວມ ຂຶ້ນກັບຫລວງພຣະບາງ.

ເນື່ອງຈາກມີຂໍ້ບົກພ່ອງ ທີ່ຟຸ່ມ່ຳລາວ ບໍ່ສາມາຕຈັດຣະບົບການປົກຄອງຊາຕ ແລະສ້າງ ຄວາມເປັນເອກພາພ ໄດ້ ໃນຫມູ່ພົລເມືອງລາວ ບັນດາເຜົ່າຕ່າງ ໃນໂອກາສຜ່ານມາ ນັ້ນເອງ ຄົນ ລາວ ບາງເຜົ່າ ທີ່ຫາກໍ່ເຂົ້າອາສັຍຢູ່ໃນດິນແດນລາວ ສມັຍຫົວເມືອງຂຶ້ນສຍາມ ທີ່ໂຕນຫນີຈາກ ການຜາບ ການສ້ງຫານ ຂອງກອງທັບຈີນ ຈາກເຫຕທີ່ມີການປຸ້ນ ການຂະບົດ ແລະໄດ້ຫລົບເຂົ້າ ມາອາສັຍຢູ່ໃນແຜ່ນດິນລາວ ຈຶ່ງຍັງບໍ່ຮູ້ຄຸນຄ່າຂອງປະເທສລາວ ແລະບໍ່ໄດ້ຊາບຊຶມ ຕໍ່ຄວາມເປັນ ລາວ ແລະ ແຕ່ສມັຍນັ້ນ ຣັຕຖະບາລສຍາມ ເອງ ກໍ່ບໍ່ໄດ້ສົນໃຈນ່ຳຫຽ້ງ ມີພຽງສົ່ງກ່ຳລັງໄປຜາບ ແລະບັງຄັບຄົນ ມາເປັນທາສ ຢ່າງດຽວ ຄັນມາຮອດສມັຍຝຣັ່ງເສສ ກໍ່ຍິ່ງສວຍໂອກາສ ທ່ຳການ ແບ່ງແຍກຊົນເຜົ່າລາວ ຫລາຍຂຶ້ນ ໂດຍສະເພາະຊົນເຜົ່າລາວສູງ ທີ່ພາຄເຫນືອ ໄດ້ຖືກບັງຄັບ ໃຫ້ມີອາຊີພສະເພາະການປຸກຝິ່ນ ໃຫ້ທາງການຝຣັ່ງ ນ່ຳອອກຂາຍຫາເງິນເຂົ້າຄັງ ເພື່ອພວກ ເພີ່ນ ຈະມີລາຍໄດ້ ສເວີຍຄວາມສຸຂ ຢູ່ໃນອິນດູຈີນ ຕໍ່ໄປ ເຈົ້າຫນ້າທີ່ຝຣັ່ງເສສ ໄດ້ຕັ້ງໂຮງສຸບຝິ່ນ ຢ່ທົ່ວປະເທສລາວ ຍົ້ວະໃຫ້ຄົນລາວກິນຝິ່ນ. ໂຮງສຸບຝິ່ນ ຈະຕິດປ້າຍຢ່ທຸກແຫ່ງ ຕາມຫນ້າຮ້ານ ເອີ້ນວ່າ **O.R (Regie d'Opium)** ແລະ ໂດຍໃຊ້ເວລາ 65 ປີ ໃນການປົກຄອງລາວນັ້ນ ຝຣັ່ງບໍ່ ເຄີຍສົນໃຈ ໃນຄວາມເປັນຢູ່ຂອງລາວ ສົນໃຈແຕ່ຈະໃຊ້ຄົນລາວ ແລະເຜົ່າຕ່າງໆ ເປັນເຫື່ຽອ ຫາ ປໂຍຊນ໌ທ່ານັ້ນ. ໃນປະວັຕສ່ວນຕົວພຣະຍາຫົວຂອງ ຫຸຍ ຊຸນະນິກອຣ (1) ກ່າວເຖິງເຣື້ອງນີ້ໄວ້ວ່າ

ຝ່າຍນ້ຳ ຟ້ງນຶ້ງວ່າ ຝ່າຍນາ ຟ້ງນຶ້ງເສີ້ນ ຝຣັ່ງເສສ ບໍ່ເຄີຍໄດ້ສ້າງ ສາໄວ້ ເພື່ອ ລາວ

(1) ຈາກປຶ້ມ ອັຕຕະຊີວະປະວັຕ ຂອງພຣະຍາຫົວຂອງ ຫຸຍ ຊຸນະນິກອຣ ສະບັບຄຳກອນ ພິມພ໌ ປີ 1974

ສະນັ້ນ ຈຶ່ງພາໃຫ້ພວກຊົນເຜົ່າ ທີ່ເຂົ້າມາອາສັຍຢູ່ລາວ ຈຶ່ງບໍ່ໄດ້ມີການປ່ຽນແປງແນວຄຶດຈິຕ ໃຈຮັບຮູ້ບຸນຄຸນ ຂອງແຜ່ນດິນລາວ ທີ່ພວກຕົນ ໄດ້ມາອາສັຍຊົ້ມຫົວນອນ ລ້ຽງຊີວິຕ.

ຈົນຮອດ ປັຈຈຸບັນ ພາກິຕເຫັນມີ ພວກຊົນເຜົ່າສ່ວນຫລາຍ ຍັງຄົງຮັກສາຮູບແນວຄຶດທີ່ເປັນ ປ່ຣະປັກຂ໌ຕ່ໍຊາຕລາວມາຕລອດ ໂດຍບໍ່ມີການປ່ຽນແປງ ແລະບາງທີ ການແບ່ງແຍກຊາຕ ແລະ ແຍກພວກ ແຍກເຜົ່າ ຢູ່ລາວ ໃນທຸກວັນນີ້ ກໍ່ອາຈເນື່ອງມາຈາກສາເຫຕນັ້ນ ກໍ່ເປັນໄດ້.

ຍ້ອນສາເຫຕທີ່ບ້ານເມືອງລາວ ຕອ້ງໄດ້ພະເຊີນຕໍ່ການສົງຄາມ ຢ່າງຮ້ຍແຮງ ຕ່ໆກັນມາ ເກືອບ 30 ປີ ການປັບປຸງການສຶກສາຮຽນຮູ້ຂອງລູກຫລານ ເຍົາວະຊົນ ບໍ່ວ່າແຕ່ຄົນລາວແທ້ ຫລື ຄົນເຜົ່າລາວ ກໍ່ມີໄດ້ບໍ່ທົ່ວເຖິງ ເພາະງົບປະມານບໍ່ພຽງພໍ, ອົພຍົພຫລົບພ້ຍ ທີ່ເກີດຈາກສົງຄາມ ທີ່ມີພົລເມືອງຈ່ຳນວນແສນ ນ່ຳພາຄອບຄົວລູກຫລານ ໂຕນຫນີມາແຕ່ມືເປົ່າ ຣັຕຖະບາລຣາຊອາ ນາຈັກຣ໌ລາວ ຈ່ຳເປັນໄດ້ລ້ຽງເກືອ ແບກຫາມຊີວິຕພົລເມືອງເຫລ່ານັ້ນ ຫລາຍໆປີ ກ່ອນທີ່ຈະລ້ຽງ ກຸ້ມຕົວ ແລະສາມາຕຖ ຕັ້ງຄອບຄົວຂຶ້ນໃຫມ່ ໄດ້ອີກ.

ດ້ວຍວ່າ ບໍ່ວ່າ ໃນດ້ານວິຊາການ ຫລືໃນດ້ານອາຊີພຄວາມເປັນຢູ່ ຂອງຄົນລາວ ທີ່ບໍ່ມີຄວາມ ກ້າວຫນ້າເທົ່າທີ່ຄວນ ນັ້ນ ຄັນເມື່ອມີການແຕກໂຕນຫນີ ຈາກບ້ານເກີດເມືອງນອນ ນາດ້ວຍກັນ ຮອດຕ່າງປ່ະເທສ ຈຶ່ງມີພວກພູ່ມ່ຳບາງເຜົ່າ ໃຊ້ວິທີປຸກຣະດົມ ແບ່ງແຍກຊົນເຜົ່າ ເຮັດໃຫ້ເກີດ ຄວາມເຂົ້າໃຈຜິດ ແລະສ້າງຄວາມແຕກແຍກ ພາຍໃນວົງການຊາຕລາວ ທ່ົວໄປ ເຊ່ັນ ຕ້ັງຂ້ໍ ກ່າວຫາແບບຜິດໆ ທີ່ວ່າທາງການລາວ ດູນ່ິນ ຢຽດຫຍ້ານ ຫລ ທີ່ວ່າ ບ່ໃຫ້ການສົ່ງເສີມຕ່ໍຊົນເຜົ່າ ຕ່ໍາໆ ເປັນຕ້ົນ ໂດຍບ່ສຶກສາຄວາມເປັນມາ ທີ່ແທ້ຈິງ ຂ້ໍນ້ີ ຈຶ່ງ ຖ້ເປັນການກະທ່ໍາທີ່ບ່ຮູ້ເທ້ົາເຖ້ົາ ການ໌ ຕ່ໍບັນຫາແທ້ຈິງ ຂອງຊາຕ ແລະເປັນການກະທ່ໍາ ທີ່ບ່ສົມເຫຕສົມຜົລ ແລະ ພາໃຫ້ຊາຕ ລາວ ເກີດຄວາມເສັຽຫາຍ ບ່ໄດ້ຮັບຄວາມຍຸຕິທັມ ຕາມທີ່ມີຄວາມເປັນຈິງ.

ທີ່ກ່ອນານ້ີ ແມ່ນບັນຫາສາເຫຕ ແຫ່ງຄວາມບ່ເປັນເອກພາພ ໃນການຢູ່ຮ່ວມກັນ ໃນສັງຄົມຊາຕ ລາວ ສ່ໍາຣັບຍຸຄຫລັງໆຕ່ໍມາ ແຕ່ປີ 1707 ຈົນຮອດສມັຍປັຈຈຸບັນ.

ແທ້ຈິງ ຄວາມເປັນເອກພາພ ແຫ່ງຊາຕ ແມ່ນບັນຫາຕ້ົນຕ່ ກ່ຽວກັບການປົກຄອງບ້ານເມືອງ ຂອງມະນຸສ, ບ້ານເມືອງທີ່ບ່ມີເອກພາພ ແມ່ນຄວາມອ່ອນແອ ແມ່ນຄວາມບ່ໍຫມັ້ນຄົງແລະຄວາມ ວຸ້ນວາຍ ອາຈທ່ໍາລາຍຊີວິຕ ແລະຄວາມສງົບສຸຂ ຂອງປ່ະຊາຊົນ ເຖິງຂ້ັນ ສ້າງຄວາມແຕກແຍກ ແລະການສລາຍຕົວ ຂອງປ່ະເທສ ໃນບ້ັນປາຍ ສະນັ້ນ ຈຶ່ງບ່ໍແມ່ນຄວາມປາຖນາ ຂອງການປົກ ຄອງຊາຕ ຫລ ຂອງນັກປົກຄອງ ໃນທຸກງສມັຍ ບ່ໍວ່າຢູ່ປ່ະເທສໃດ ກ່ໍຕາມ.

ກຽ່ວກັບການສ້າງຄວາມເອກພາພ ພາຍໃນປະເທສລ້ານຊ້າງໃນສມັຍສົມເດ້ຈພຣະເຈົ້າຟ້າງຸ່ມ ມະຫາ ຣາຊ ນັ້ນ ໂດຍສະເພາະກຽ່ວກັບການປົກຄອງຊົນເຜົ່າຕ່າງໆ ເຮົາຈະພົບວ່າ ພຣະອົງຄ໌ໃຫ້ຄວາມສຳຄັນແກ່ ຊົນເຜົ່າ ຫລາຍສົມຄວນ ແລະໃນເວລາດຽວກັນນັ້ນ ກໍຊົງນຶກເຖິງຄວາມເປັນເອກພາພ ພາຍໃນ ຂອງ ການ ປົກຄອງປະເທສ ໄປພ້ອມໆກັນ. ແຕ່ ຄືດັ່ງທີ່ກ່າວມາແລ້ວ ນັ້ນເອງ,ວິທີການສ້າງຄວາມເປັນເອກພາພ ນັ້ນ ມີທັງການສົ່ງເສີມການສຶກສາ ຮຽນຮູ້ ແລະການໃຫ້ຄວາມເປັນທັມກ້ຳເກິ່ງກັນ ຜິດເປັນຜິດຖືກເປັນຖືກ.

ສິ່ງທີ່ສຳຄັນຢ່າງນຶ່ງ ກໍແມ່ນການຈັດສັນຣະບົບຄວາມເປັນຢູ່ ໃຫ້ທົ່ວເຖິງ ແລະເທົ່າທຽມກັນ ເຊິ່ງຂໍ້ນີ້ ສົມເດ້ຈ ພຣະເຈົ້າຟ້າງຸ່ມ ມະຫາຣາຊ ໄດ້ຊົງດຳເນີນການເຫມາະສົມທີ່ສຸດ ຄື ໂດຍການຍ້າຍຄອບຄົວ ຂອງພວກຊົນເຜົ່າ ທີ່ດຳ ຣົງຊີວິຕ ຢູ່ໃນກຸ່ມ ຫລືບັຣຍາກາສ ທີ່ດ້ອຍການພັທທະນາ ໃຫ້ຫງັບຍ້າຍເຂົ້າມາ ຢູ່ໃນເຂຕພັທທະນາ ເຊັ່ນ ຄື ໄດ້ຊົງ ສັ່ງໃຫ້ພຣະຍາເມືອງຂວາ (ບາຫີມ) ຍົກຍ້າຍຄອບຄົວພວກຂ້າເກົ່າ ທີ່ແຂວງພາຄເຫນືອ(1)ໃຫ້ລົງມາຢູ່ໃນເຂຕຖິ່ນ ຈະເຮີມ ຈຳນວນ 10,000 ຄອບຄົວ ມາຕັ້ງຊີວິຕ ຢູ່ກະແດຝ້າແຕ່ບນອກນະຄອຣຫລວງຈັນທນ໌ (ຄົງຈະແມ່ນ ຢູ່ແຖວໆ ເມືອງນ້ອຍຊ້ຽງດາ ,ບ້ານໄຜ່ລ້ອມ ບ້ານໂຊຄ ບ້ານໂຊ ຫລັກ 21 ນັ້ນເອງ) ຈຳນວນ 10,000 ຄອບຄົວ ໃຫ້ໄປຕັ້ງ ຖິ່ນຖານ ຢູ່ເຂຕ ຫນອງຫານນ້ອຍ ຫນອງຫານຫລວງ ແລະອີກ 10,000 ຄອບຄົວ ໃຫ້ໄປຕັ້ງຖິ່ນຖານ ຢູ່ໃນເຂຕ ພູວານເກົ້າວານປາວ (ຢູ່ທີ່ແຂວງເມືອງກາລະສິນທຸ) ຮວມແລ້ວ ເວລານັ້ນ ມີເຖິງ 30,000 ຄອບຄົວ ໄລ່ເປັນ ຕົວເລຂພົລເມືອງ ຄົງຈະມີ ບໍ່ຕ່ຳກວ່າ 150,000 ຄົນ.

ໂດຍ ຖືວ່າ ນຳເອົາພວກງ່ວ ມາເປັນຄົນພັທທະນາ ເຊິ່ງຕ່ຳມາ ກໍ່ກາຍເປັນຄົນເມືອງ ໃນທີ່ສຸດ. ສະນັ້ນຈຶ່ງເຂົ້າໃຈ ໄດ້ວ່າ ພວກຂ້າເກົ່າ ເປັນຈຳນວນຫລວງຫລາຍ ນັ້ນເອງ ທີ່ໄດ້ກາຍເປັນຊາວນະຄອຣຫລວງຈັນທນ໌ ໃນສມັຍນັ້ນ.

ໃນສມັຍນຶ່ງ ປະມານປີ 1960-63 ເມື່ອທ່ານ ພ.ອ.ສະຫຸລ ຊຸນະນິກອຣ ໄດ້ເປັນເຈົ້າກົ່ງແຂວງ ສີທັນດອຣ ທ່ານໄດ້ມີຄວາມຄຶດ ນຳເອົາພວກຂ້າ ຈາກບ້ານປ່າຕື້ອ ຫລືບ້ານປ່ະ ອອກມາຕັ້ງຄອບຄົວແບບລາວໆ ເພາະພວກຂາເຈົ້າ ທຳກິນແບບຟັນໄຮ່ ແຕ່ລະປີ ໄດ້ຖາງປ່າຈຳນວນຫລາຍ. ທາງການເວລານັ້ນ ຈຳຕ້ອງໄດ້ເຮັດເຮືອນ ຊ່ວຍໃຫ້ພວກເຂົາ ໄດ້ຍ້າຍຄອບຄົວ ຫນີຈາກບ້ານເດີມ, ຫລາຍຄອບຄົວຊາວບ້ານປ່າຕື້ອ ໂດຍການນຳຂອງຍາພໍ່ເຕອ ທາງການຊື້ຄວາຍ ແລະຫາເຂົ້າປຸກ ພາເຮັດນາແບບລາວ ຢູ່ທີ່ບໍຣິເວນຕິດກັບຫ້ວຍເຕົ້າປຸງ. ປັຈຈຸບັນ ບ້ານໃຫ່ມແຫ່ງນີ້ ຈຶ່ງບໍ່ແມ່ນບ້ານ ຂ້າ ຄືແຕ່ກ່ອນແລ້ວ ຊື່ "ບ້ານໜອງແຕ້" ກາຍເປັນບ້ານທີ່ຈະເຮີມແຫ່ງໃຫມ່ ຢູ່ໃນເຂຕນີ້ ການນຸ່ງກະຕຸ່ມຈ້ອນ ຕູດໃນແບບເດີມ ກໍ່ຫນົດໄປແລ້ວ ພວກຍິງສາວ ກໍ່ສວຍງາມ ຄືກັບຜູ່ສາວລາວ ທົ່ວໄປ. ນີ້ ແມ່ນ ການນຳພາ ໃນວິທີ ງ່າຍໆ ໃນການປະຕິວັຕ ວັທທະນະທັມ ທີ່ເຮັດໃຫ້ກ້າວໜ້າຂຶ້ນມາ ຕາມລຳດັບ ໂດຍບໍ່ມີການເຈັບປວດທຸ້ງຫນົດ.

✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲✲

(1) ພົ້ງສາວະດານລາວ ສະບັບກະຊວງສຶກສາທິການ ຣຈນາ ໂດຍ ມະຫາສິລາ ວີຣະວົ້ງສ໌ ປີ 1957 ຫນ້າ 63

ຊົງນໍາເອົາພຣະພຸທທະສາສນາ ຈາກ

ປະເທສຂເມຣ ເຂົ້ໍ້ມາຍັງລາວ

****

ປັຈຈຸບັນ ພຣະພຸທທະສາສນາ ກາຍເປັນສາສນາ ປະຈໍາຊາຕລາວ. ປະເທສເພື່ອນບ້ານຂອງ ລາວ ຄື ພະມ້າ ໄທຍ ແລະຂເມຣ ຕ່າງຍອມຮັບເອົາພຣະພຸທທະສາສນາ ໄວ້ເປັນສາສນາປະຈໍາ ຊາຕຂອງຂາເຈົ້າ ຄືກັນ ເພາະຄວາມນັບຖືຂອງປະຊາຊົນ ໃນແຕ່ລະປະເທສ ທີ່ມີຕໍ່ພຣະພຸທທະ ສາສນາ ກໍ່ສູງສົ່ງ ເປັນພິເສສ.

ຄວາມຈິງແລ້ວ ຊົນຊາຕລາວ ໄດ້ເຄີຍນັບຖືພຣະພຸທທະສາສນາ ນາກ່ອນແລ້ວ ແຕ່ສມັຍອານາ ຈັກຣ໌ຫມອງແສ ແຕ່ເປັນນິກາຍມະຫາຍານ ທີ່ໄດ້ຮັບມາຈາກທາງຈີນ ແລະຄົນມາຣອດຣະຫວ່າງ ປີ ຄ.ສ.1017 ເຖິງ 1057 ກໍ່ແມ່ນຍຸຄສມັຍການແຜ່ອໍານາຈ ຂອງພຣະເຈົ້າອະນຸຣຸທຣາຊມ້ານ ແຫ່ງ ພະມ້າ ແລະເວລາດຽວກັນ ກໍ່ໄດ້ມີການເຜີຍແຜ່ພຣະພຸທທະສາສນາ ໄປພ້ອມກັນ ສັນນິຕຖານໄດ ວ່າ ອານາຈັກຣ໌ເມືອງອະວາ ຄົງໄດ້ມີສ່ວນຮັບເອົາພຣະພຸທທະສາສນາ ແບບພະມ້າ ໃນຄັ້ງນີ້ດ້ວຍ ເພາະການປຣົມແປງມະຫາສັກຣາຊ ນາເປັນຈຸລສັກຣາຊ (ຈ.ສ.) ກໍ່ໄດ້ ມີຂຶ້ນ ໃນຄັ້ງນີ້ດ້ວຍ ແລະ ລາວເຮົາເອງ ກໍ່ໄດ້ຮັບເອົາຈຸລສັກຣາຊ ໃນການໃຊ້ຄໍານວນ ຢ່າງເປັນທາງການນາແລ້ວ ແຕ່ ກ່ອນສມັຍຟ້າງຸ່ມ ຫລືອາຈແມ່ນໃຊ້ນາແຕ່ຍຸຄຕົ້ນໆ ນາແລ້ວກໍ່ໄດ.

ອີກປະການນຶ່ງ ຕານປະວັຕອຸຣັງຄະທາຕ ເຊິ່ງກ່າວວ່າ ພຣະອໍຣະຫັນຕ໌ ໄດ້ນໍາເອົາພຣະພຸທທະ ສາສນາ ແລະພຣະບໍຣົມອັຕຖິທາຕ(ກະດູກ ພຣະພຸທທະເຈົ້າ) ເຂົ້ໍ້ນາຍັງດິນແດນສຸວັນນະພູມ ທີ່ ພຣະທາຕຫລວງຈຽງຈັນທ໌ ພຣະທາຕນະຄອຣພະນົມ ເປັນຕົ້ນ ກໍ່ມີນາ ແຕ່ສມັຍຫລັງພຸທທະ ກາລ ພຽງເລັກນ້ອຍ ຈຶ່ງຖືວ່າ ດິນແດນແຫ່ງນີ້ ໄດ້ນັບຖືພຣະພຸທທະສາສນາ ນາແຕ່ກ່ອນແລ້ວ ສິ່ງທີ່ພວກເຮົາ ຈະສຣຸບໄດ ກຽ່ວກັບການນໍາເອົາພຣະພຸທທະສາສນາ ນາຈາກປະເທສຂເມຣ ຄັ້ງສົມເດັຈພຣະເຈົ້າຟ້າງຸ່ມນີ້ ມີການສັນນິຕຖານໄດ ເປັນ 3 ປະການຄື:

(1) ເພາະພຣະພຸທທະສາສນາ ທີ່ມີຢູ່ກ່ອນຫນ້ານີ້ ກະແຈກກະຈາຍ ການບໍຣິຫານຄນະສົງ ບໍ່ ເປັນຫົວບໍ່ເປັນຂາ ຈຶ່ງນໍາເອົາຄນະສົງ ແລະແບບແຜນ ເຊິ່ງປະກອບດ້ວຍພຣະສົງ ຜູ້ຊົງຄຸນວຸທ ທິ ວິຊາການ ເຂົ້ໍ້ນາສ້າງຕັ້ງ ແລະເຜີຍແຜ່ໂຄງການຄນະສົງ ຂຶ້ນໃຫມ ໃຫ້ເປັນກຽຕແກ່ການ ປະຕິວັຕຟື້ນຟູຊາຕ ຂອງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ພຣະອົງຄ໌ເອງ.

(2) ອາຈເປັນເພາະວ່າ ລາວສມັຍນັ້ນ ນັກນິຍົມອໍານາຈຂອງຂອມ ໃຊ້ອັກສອຣຂອມ ໂດຍແມ່ນ ມະຄອຣຫລວງ (ອັງກໍ່ຣ໌ວັຕ) ເປັນທີ່ຂຶ້ນຊື່ ລືຊາຢູ່ກ່ອນແລ້ວ ສະນັ້ນ ການທີ່ນໍາເອົາພຣະພຸທທະ ສາສນາ ນາຈາກມະຄອຣຫລວງ ກໍ່ຖືເປັນກຽຕ ແກ່ປະເທສລ້ານຊ້າງ ໄປໃນຕົວ.

ພ້ອມທ້າວອາສັຍເຫຕຜົລທີ່ວ່າ ສົມເດັ້ຈພຣະເຈົ້າຟ້າງຸ່ມ ເອງ ກໍ່ໄດ້ຮັບການອຸ້ມຊູຈາກປະເທສ ຂອມຢູ່ແລ້ວ ແລະພ້ອມດຽວກັນ ກໍ່ຍັງໄດ້ຮັບຄຳອອ້ນວອນ ຈາກພຣະອັຄຄະມະເຫສີ ພຣະນາງ ແກ້ວເກ້ງຍາ ອີກຕື່ນ ຍິ່ງມີນ້ຳໜັກສູງ ໃນການໄປຂໍພຣະພຸທທະສາສນາແລະພຣະສົງຄ໌ມາຈາກ ປະເທສຂເມຣ.

(3) ອາຈເປັນໄປຈິງ ກໍ່ໄດ້ ທີ່ວ່າອານາຈັກຣ໌ເມືອງຊະວາ ໃນເວລານັ້ນ ຍັງບໍ່ທັນມີວັດວາ ພຣະ ພຸທທະສາສນາທີ່ເປັນຫລັກຖານແນ່ນອນ ຄົນທັ່ງຫລາຍ ຍັງນັບຖືຜີຟ້າຜີແຖນ ທີ່ເປັນສາສນາດັ້ງ ເດີ່ມ ຂອງພວກຕົນຢູ່ ດັ່ງທີ່ສົມເດັ້ຈພຣະນາງແກ້ວເກ້ງຍາ ຊົງຫົມຫວຍພຣະທັຍ ເກົດຄວາມເສົ້າ ສລົດໃຈ ຈົ່ງໄດ້ຊົງຂໍຣ້ອງພຣະສາມີ ໄປຂໍພຣະສົງຄ໌ ແລະພຣະພຸທທະສາສນາ ມາຈາກປະເທສ ຂເມຣ.

ແນວໃດ ກໍ່ຕາມ ສິ່ງແນ່ນອນທີ່ສຸດ ປະຊາຊົນລາວ ນີ້ ໄດ້ເຄີຍນັບຖືພຣະພຸທທະສາສນາ ມາ ແລ້ວ ແຕ່ສມັຍອານາຈັກຣ໌ຫນອງແສ ດັ່ງທີ່ກ່າວມາແລ້ວ ແຕ່ເນື່ອງຈາກການອົພຍົພລົ້ງມາດົນ ນານ ຫລາຍຮ້ອຍປີ ຢູ່ໃນດົນແດນລ້ານຊ້າງ ພຣະພຸທທະສາສນາ ແລະພຣະສົງຄ໌ ກໍ່ອາຈສລາຍ ຕົວລົ້ງໄປ ກາຍເປັນປະເພນີແບບຈີນ ຄືເປັນທັ່ງພຸທທະສາສນາແລະເປັນທັ່ງລັທທິເຕົ໋າ (**Taoism**) ສ່ວນຢູ່ລາວນີ້ ກໍ່ອາຈມີສະພາພ ເຊັ່ນດຽວກັນນີ້ ຄືເປັນທັ່ງພຣະພຸທທະສາສນາ ແລະເປັນທັ່ງລັທທິ ນິຍົມແຖນຟ້າ ໄປພ້ອມກັນ.

ອີກຢ່າງນຶ່ງ ຄວາມເຊື່ອຖື ຂອງຊົນຊາຕອ້ຍລາວ ແຕ່ດັ້ງເດີ່ມນັ້ນ ກໍ່ບໍ່ໄດ້ແຕກຕ່າງຈາກຊົນ ຊາຕຈີນ ຍີ່ປຸ່ນ ແລະຊົນຊາຕຂອມ ແຕ່ປະການໃດ ມີຄວາມແຕກຕ່າງກັນແດ່ ກໍ່ແນ່ນຄວາມ ເຊື່ອຖືທີ່ພິວພັນທ໌ ເຖິງອ່ານາຈການປົກຄອງ ໃນແຕ່ລະຊາຕ ເຊັ່ນ:

– ຊົນຊາຕຍີ່ປຸ່ນ ມີຄວາມເຊື່ອຖືວ່າ ຊາຕຕົນ ເກົດມາຈາກພຣະອາທິຈ ເຊົ່ງບັຣພະບຸຣຸສ ຂອງຊາວຍີ່ປຸ່ນ ທີ່ລົ້ງມາຈາກພຣະອາທິຈ ຄົນທ່າອິດ ນາມວ່າ ເຍໂມເທັນໂນ ແລະມາສ້ັ້ງໂລກ ມະນຸສ ໃນເກາະຍີ່ປຸ່ນ ນີ້ ແລ້ວຈົ່ງຂຍາຍເຊື້ອຊາຕເຜົ່າພັນທຸ໌ຍີ່ປຸ່ນ ອອກໄປທົ່ວເກາະ.

ຕະກຸລມະຫາຈັກກະພັຕຍີ່ປຸ່ນ ເປັນຕະກຸລທີ່ສືບຕໍ່ລົ້ງມາ ຈາກເຍໂມເທັນໂນ ໂດຍກົ່ງ ສະນັ້ນ ພຣະມະຫາຈັກກະພັຕຍີ່ປຸ່ນ ຈົ່ງເປັນຕະກຸລຫລັກ ຫລືຕະກຸລຕົ້ນກ່ຳເນີດ ຂອງຊາວຍີ່ປຸ່ນ ທົ່ວປະ ເທສ ໃນປັຈຈຸບັນ.

ຍ້ອນຄວາມເຊື່ອດັ່ງກ່າວ ພາໃຫ້ຊາວຍີ່ປຸ່ນ ຖືວ່າ ພວກຕົນ ກັບພຣະມະຫາຈັກກະພັຕຍີ່ປຸ່ນ ເປັນຄົນໃນຕະກຸລດຽວກັນ ຊາວຍີ່ປຸ່ນ ມີຫນ້າທີ່ປົກປັກຮັກສາຕະກຸລພຣະມະຫາຈັກກະພັຕ ຂອງ ຕົນເຫມືອນກັບຊີວິຕ ຂອງຕົນເອງ. ໃນທີ່ສຸດ ເມື່ອປະສົນກົນກືນ ກັບລັທທິສາສນາຊົນໂຕ ເຂົ້າຕື້ນ ກໍ່ພາໃຫ້ເກົດລັທທິອຸທິສຕົນ ສລະຊີວິຕເພື່ອມະຫາຈັກກະພັຕ (ລັທທິຊາຕນິຍົມ ຫົວຮຸນແຮງ)

-ຊົນຊາຕຈີນ: ຄວາມເຊື່ອຖືຂອງຊົນຊາຕຈີນ ຕ່າງຈາກຊາວຍີ່ປຸ່ນ ຢູ່ບ່ອນວ່າ ກະສັຕຣິຍ໌ຈີນ ເປັນໂອຣົສ ຂອງສວັຣຄ໌ ເຊິ່ງເອີ້ນກັນວ່າ ຮອ່ງເຕ້ (ຮອ່ງ ແປວ່າ ໂອຣົສ ຕີ້ ຫລື ເຕ້ ແປວ່າເທວະດາ ຫລື ສວັຣຄ໌) ຫມາຍຄວາມວ່າ ກະສັຕຣິຍ໌ຈີນ ກັບປະຊາຊົນພົລເມືອງຈີນ ບໍ່ແມ່ນຄົນພວກດຽວກັນ,ກະສັຕຣິຍ໌ ແມ່ນຊາວຟ້າ ຫລືເທພເຈົ້າ ສ່ວນຊາວຈີນ ແມ່ນມະນຸສທັມມະດາ. ສະນັ້ນ ມະນຸສຕ້ອງໄດ້ຍອມສວັຣຄ໌ ຈຶ່ງມີຄ່າໃຊ້ຕິດປາກ ຂອງຊາວຈີນໂບຣານວ່າ ຮອ່ງເຕ້ ໃຫ້ຕາຍ ກໍ່ຕ້ອງຕາຍ ຮອ່ງເຕ້ ໃຫ້ເປັນ ກໍ່ຕ້ອງເປັນ.

ຈາກຄວາມເຊື່ອຖືອັນນີ້ ພາໃຫ້ອ່ານາຈການປົກຄອງ ຂອງກະສັຕຣິຍ໌ຈີນ ມີຄວາມສັກດ໌ສິທເຫນືອພົລເມືອງຈີນ ຢ່າງຫລວງຫລາຍ ຈົນເຖິງກັບວ່າ ຊາວຈີນ ໄດ້ຍອມເອີ້ນຊື່ ຂອງຊາຕຕົນ ໄປຕາມຊື່ຂອງກະສັຕຣິຍ໌ ເຊັ່ນ ໃນສມັຍ ຈິ່ນ ພົລເມືອງຈີນ ກໍ່ເອີ້ນຊື່ພວກຕົນວ່າ "ພວກຈິ່ນ" ແລະ ໃນຣາຊວົງສ໌ຮັ່ນ ກໍ່ເອີ້ນຊື່ຕົນເອງວ່າ "ພວກຮັ່ນ" ຫລືຊົນຊາຕຮັ່ນ.

ນິທານໂບຣານຂອງຈີນ ມີຢູ່ວ່າ ກະສັຕຣິຍ໌ຟູຣິ ສເດັຈລົງມາຈາກແດນສວັຣຄ໌ ໂດຍມີແສ້ສາຍຟ້າ ເປັນອ່ານາຈສັກດ໌ສິທ ຈຶ່ງລົງມາຜາບຫມູ່ມະນຸສ ເອົາເປັນບໍຣິວາຣ ຂອງພຣະອົງຄ໌ໄດ້ ຢ່າງຣາບຄາບ, ໃນທີ່ສຸດ ກໍ່ຍຶດອ່ານາຈປົກຄອງມະນຸສໄດ້ ຄືຊົນຊາຕຈີນ ໃນທຸກວັນນີ້ເອງ ແລະຈີນກໍ່ໄດ້ຍອມຮັບຖານະ ແຫ່ງໂອຣົສສວັຣຄ໌ ຄືຮອ່ງເຕ້ ຂອງຂາເຈົ້າຈົນຫມົດຫົວໃຈ.

- ຊົນຊາຕຂເມຣ: ມີຄວາມເຊື່ອວ່າ ຊາຕຂອງພວກຕົນ ໄດ້ກໍາເນີດມາຈາກ ທ້ອງກັນບ ສອງ ຍັມພູ ກັບນາງເມຣິ ເຊິ່ງເປັນມະຫາເທພ ແລະຊາວຂເມຣທຸກຄົນ ຈຶ່ງມີຄວາມພູມໃຈ ທີ່ຕົນເປັນລູກຂອງເທພເຈົ້າ ຊາວຂເມຣທ້ັງຫມົດ ຈຶ່ງໄດ້ຊື່ວ່າ "ກັມພູຊາ" ແປວ່າ ຜູ່ເກີດຈາກທ້ອງ ກັມບຸ. (ກັມບຸ ຊື່ເທພເຈົ້າ + ຊາ ແປວ່າ ເກີດ)

- ສໍາຣັບຊົນຊາຕລາວ: ສະເພາະໃນສມັຍລ້ານຊ້ຳ ໄດ້ຮັບອິທທິພົລທາງສາສນາດັ້ງເດີມ ໃນດົນແດນແຫລມທອງ ນີ້ຈຶ່ງນິຍົມຖວາຍພຣະນາມ ຂອງກະສັຕຣິຍ໌ ຕົນເອງວ່າ " ພຣະເຈົ້າ ແຜ່ນດົນ" ຄືຍົກຖານະຂອງກະສັຕຣິຍ໌ ເປັນຖານະເທພເຈົ້າ.

ແຕ່ໃນສມັຍຫນອງແສ ຊົນຊາຕລາວ ມີຄວາມເຊື່ອຖືສູງ ບໍ່ໄດ້ນ້ອຍໄປກວ່າຊາຕອື່ນ ຈະເຫັນໄດ້ວ່າ ຊົນຊາຕລາວທຸກຄົນ ຢູ່ໃນຖານະທີ່ເປັນເທວະດາ ດ້ວຍກັນທ້ັງຫມົດ ພວກເຮົານິຍົມຮຽກຕົນເອງວ່າ ໄທຂ້ອຍ ໄທເຈົ້າ ໄປບ້ານເຫນືອ ໄທບ້ານໃຕ້ ໄທຫລວງພຣະບາງ ໄທວຽງຈັນທນ໌ ໄທພວນ ໄທດໍາ ໄທແດງ ໄທຂາວ ໄທລື້ ໄທຍວນ (ໄທລ້ານນາ) ເປັນຕົ້ນ ເພາະຖືຕົນເປັນ ເທວະດາ ຄື ກັນທ້ັງຫມົດ ແລະສະເພາະ "ໄທລ້ານຊ້ຳ" ນີ້ ຍັງມີຊື່ພິເສສໄປອີກ ຄືເອີ້ນຕົນວ່າ "ແຖນ" ຄື ເປັນລູກພຣະຍາແຖນ ຫລືເກີດຈາກແຖນ.

ຕາມທີ່ພາກິຕເຫັນຊື່ ຂອງຊົນຊາຕອ້າຍລາວ ໃນພາຄພື້ນສິບສອງຈຸໄທ ມັກຮຽກຊື່ຕົນເອງວ່າ "ແນນ"ແລະຮອດເຂຕລ້ານຊ້າງ ຮຽກວ່າ "ແຖນ" ຫລືບາງທີ ໃນສມັຍທີ່ລາວ ຍັງຕັ້ງພຸມລ່າເນົາຢູ່ ເຂຕສິບສອງຈຸໄທ ໄດ້ຮຽກຕົນ ເປັນຊື່ "ແນນ" ນໍາກັນຫນົດນາກ່ອນ ເຊັ່ນນັ້ນ ກໍ່ໄດ້ ຈຶ່ງນາປຽນ ເປັນ "ແຖນ " ຕາມພາຍຫລັງ ເພາະ "ແຖນ" ກັບ"ແນນ" ນັ້ນ ມີຄວາມຫມາຍດຽວກັນ ຄື ແປວ່າ "ເທວະດາ" ທັງນັ້ນ. ແລະນິທານຫນາກນໍ້າເຕົ້າ ກໍ່ເກີດຂຶ້ນຈາກຄວາມເຊື່ອແບບນີ້.

ສະນັ້ນ ສາສນາດັ້ງເດີມຂອງລາວ ຄື "ສາສນາແຖນຟ້າ" ເຊິ່ງມີຄວາມເຊື່ອກັນວ່າ ມະນຸສນາ ຈາກຟ້າຈາກແຖນ ແລະແຖນ ນັ້ນ ມີໂຮງປັ້ນ ໂຮງຫລໍ່ຢູ່ບົນສວັຣຄ໌ ບັຣພະບຸຣຸສ ລາວ ລົງນາຈາກ ສວັຣຄ໌ ກໍ່ໄດ້ຫນາກນໍ້າເຕົ້າຈາກແຖນ ລົງນາພ້ອມ ດັ່ງທີ່ກ່າວນາແລ້ວໃນເບື້ອງຕົ້ນ.

ຄົນລາວເຮົາ ມີພິທີບູຊາແຖນ ເປັນປະຈໍາໃນທຸກໆເດືອນສາມເພັ້ງ, ເວລາທີ່ຜູ້ຂຽນ ຍັງນ້ອຍ ກໍ່ເຄີຍຮ່ວມໃນພິທີໄຫວ້ແຖນ ນີ້ ເປັນປະຈໍາ ເພີ່ນເອີ້ນວ່າ "ເຊີນຜີໄທ້ " ຫລື "ຜີກະໄທ ".ການກໍ່ ນິດວັນບູຊາແຖນ ທີ່ກະໃສ່ "ເດືອນສາມເພັ້ງ " ນັ້ນ ບໍ່ຊາບວ່ານີ້ຂຶ້ນໄດ້ວິທີໃດ ຫລືວ່າ ຖືເອົາຕາມ ປະເພນີ ນັບແຕ່ສມັຍທີ່ພຣະເຈົ້າຟ້າງຸ່ມ ມະຫາຣາຊ ຊຸມນຸມສລອງຊັຍຊນະ ແລະປະກາສນະໂຍ ບາຍການປົກຄອງ ໃນປີ 1357 ທີ່ກະທໍາຂຶ້ນ ຢູ່ວຽງຈັນທນ ໂດຍຈັດໃສ່ເດືອນສາມເພັ້ງ ເວລານັ້ນ ຫລືວ່າ ວັນເດືອນສາມເພັ້ງ ແມ່ນວັນໄຫວ້ແຖນ ປົກຕິທັມນະດາ ຂອງຊົນຊາຕລາວ ທີ່ຖືກັນນາ ກ່ອນແລ້ວ ເຊິ່ງສົມເດັຈພຣະເຈົ້າຟ້າງຸ່ມ ມະຫາຣາຊ ຈຶ່ງຊົງຖືເອົາວັນນີ້ ເປັນວັນສລອງຊັຍຊນະ ເລີຍຈັດລ້ຽງຟ້າ ລຽງແຖນໄປພ້ອມກັນ ເຊັ່ນນັ້ນ ກໍ່ໄດ້.

ລັທທິແຖນຟ້າ ຂອງລາວ ໄດ້ຖືກປະກາສ ສລາຍຕົວ ໃນສມັຍສົມເດັຈພຣະເຈົ້າໂພທິສາຣະ ຣາຊ ຄ.ສ.1520–1560 ຫລັງຈາກເວລາທີ່ພຣະອົງຄ໌ອອກບວຊ ເປັນເວລາ 1 ພັຣນາ ແລະກໍ່ລາ ສິກຂາອອກນາ ຈຶ່ງຊົງປະກາສ ໃຫ້ປະຊາຊົນລາວ ເລີກລົ້ມການນັບຖືຜີໄທ້ຜີແຖນ ແລະໄດ້ຊົງສັ່ງ ໃຫ້ເລີກໂຮງພິທີບວງສຣວງ ຫລືໂຮງພິທີບູຊາແຖນ ທົ່ວນະຄຣຫລວງພຣະບາງ ຕັ້ງແຕ່ບັດນັ້ນ ເປັນຕົ້ນນາ.

ເມື່ອກ່າວເຖິງຄວາມເຊື່ອຖື ຂອງຕົນເຊັ່ນນີ້ ກໍ່ສຣຸບໄດ້ວ່າ ລັດທທິນັບຖືຜີໄທ້ ຜີແຖນ ກາຍ ເປັນລັທທິນິຍົມ ແບບນຶ່ງ ຂອງຊົນຊາຕລາວ ເພາະມັນໄດ້ປະສົມກົມກືນ ກັບຄວາມເປັນລາວ ໄປ ໃນຕົວ ຈົນເຖິງຂັ້ນວ່າ ຄົນລາວເຮົາ ໄດ້ເອີ້ນຊື່ຂອງຕົນເອງວ່າ "ພວກແຖນ" ຫລື "ພວກແນນ" ນາ ຕລອດ ຈະເຫັນໄດ້ ຈາກວັນນະກັມ ນະທາກາພຍ໌ ເຣື້ອງທ້າວຮຸ່ງ–ທ້າວເຈືອງ ຕອນກ່າວເຖິງ ການອ້າງເຊີນຊາວໜອງແສ ນາຊ່ອຍຣົບ ໄດ້ມີຄໍ່າກອນບົທນຶ່ງ ວ່າ:

+ ເມື່ອນັ້ນ ພຣະບາທເຈົ້າ ລ້ານໂລກ ແຖນລ (ຂຸນລ ທີ່ຄອງເມືອງຕ້າຫລີ)
ທັຣມ ຍ່າ ກົນກາຫລົງ (ເກົ້າຫລົ້ງ–ກົວລົງ) ຢູ່ກະເສີນ ຍູສ້ຽ

ທຸກໄທ ພ້ອມ ຂຸນແຖມ ເລີຍກ່າວ
ວອນພຣະນ້າວ ລ້ຽງພ້ອມ ຊ່ອຍແຮງ

ບົທຈັນນະກັນ ເຣື້ອງຟ້າແດດ-ສູງຍາງ ໄດ້ກ່າວເຖິງການຣົບເລວ ຣະຫວ່າງພວກຊາວແມນ ກັບພວຂອມຖິ່ນເດີມ ໃນເຂຕຟ້າແດດ(ໃນເຂຕເມືອງກາລະສິນທຸ ປັຈຈຸບັນ) ໂດຍກ່າວວ່າ:

+ ມີແຕ່ ເສີກມືດກ້ຳ ເທົ້າທ່ວມົວເມົາ
ເຕັມພະລານພຽງ ມືດມົວ ແມນຟ້ຳ
ແມນກ່ ເລື່ອນໆລ້ອມ ອ້ອມຫມູ ພຣະຍາຈັນທ
ຣາຊາ ທາງຊຽງໂສ້ມ ຄະນ່າໃຈ ທ້ຳຄ້ຽ ฯลฯ

ເນື່ອງຈາກຊີວິຕຊົນຊາຕອ້ຽຍລາວ ມີການປະສົມກົມກືນ ຢູ່ໃນຄວາມນິຍົມຜີໄທ້ ຜີແຖນ ຈົນ ຖືວ່າ ພວກຕົນ ຄື " ພວກໄທ້ " ແຖນ ຫລື ແມນ ແລະຊົນຊາຕຕົນ ເກີດມາຈາກແຖນຟ້າ ສະນັ້ນ ເມື່ອພຣະພຸທທະສາສນາ ເຂ້ົ້ามายังประเทสลาวชาว ນ່າເອົາລັທທິຄວາມເຊື່ອຖືแบบใหม่และ ມີปรัชยาอันสูงกว่า จຶ່ງบีบให้ลัทธิแถนฟ้า กายเป็น "ลัทธิ ผี " ส່ວน พวกที่ถือพระพุทธะ สาสนา เลียกายเป็น "พวกถือทัม" ต่มา ຈຶ່ງเกิดมีมีมตไล่ผี และมีอาจารย์ "ทัมไล่ผี หลี " ทัมพาบผี " ขึ้นมาในสังคมลาว พวกผีห้าหลาย ยู่ในประเพท ผีไท้ ผีแถน ผีปอบ ผีกะ ผีไพ่ง ผีพาย ผีหม้อ มะธิก กิกไม้ แม่นจะต้องถือกพาบให้หมด.

ເນື່ອງຈາກ ອິທທິພົລທາງພຣະພຸທທະສາສນາ ທ້ຳໃນຮູບຣັຊຍາ ຄຳສອນ ແລະພາຄປະຕິບັຕ ไปสูงกว่าลัทธิดั้งเดิม ขอางลาว และในด้านจัมนะคะดี ก่มีความเลิกเช่ง หลายกว่า แต่กอ่นที่จะลบล้างลัทธิความเชื่อถือ ดั้งเดิมได้ ก่ตอ้งใช้เวลาดินหลายสมควน จะเห้น จากบทจัมนะคะดี ที่ภรงกับการต่สู้ ระหว่าง 2 แมวคือ คือ ฝ่ายนับถือพระพุทธะสาสนา และฝ่ายนับถือผีแถน ก่คือ " ในเรื้องหม้าพากไภภะดึ้น " โดยมีเรื้องเล่าว่า

